Sacombank

# ກຳນົດ ແລະ ເງື່ອນໄຂ ການອອກບັດ ແລະ ການນຳໃຊ້ບັດສິນເຊື່ອສ່ວນບຸກຄົນ ຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ

**ຂໍ້ກຳນົດລວມ:**

ເນື້ອໃນຂອງບັນດາຂໍ້ກຳນົດ ແລະ ເງື່ອນໄຂລຸ່ມນີ້ ພ້ອມກັບ ໃບສະເໜີອະນຸມັດອອກບັດສິນເຊື່ອໃນຮູບແບບສັນຍາ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ “ໃບສະເໜີ”) ໄດ້ຖືກສ້າງເປັນສັນຍາເພື່ອອອກບັດ ແລະ ນຳໃຊ້ບັດ ລະຫວ່າງ Sacombank Lao ແລະ ເຈົ້າຂອງບັດ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ “ສັນຍາ”). ພາກສ່ວນຂອງສັນຍານີ້ ມີຫຼັກຖານແມ່ນການລົງລາຍເຊັນໃນໃບສະເໜີ, ເຈົ້າຂອງບັດ ແລະ Sacombank Lao ໄດ້ຜູກພັນຕົນເຂົ້າໃນການປະຕິບັດບັນດາຂໍ້ກຳນົດ ແລະ ເງື່ອນໄຂນີ້.

ຊາຄອມແບັງ ລາວ ເຫັນດີໃຫ້ເຈົ້າຂອງບັດນຳໃຊ້ບັດໃນການຊຳລະຕາມວົງເງິນທີ່ໄດ້ຮັບອະນຸມັດ ແລະ ຕາມການຕົກລົງເຫັນດີຂອງສອງຝ່າຍທີ່ເຫັນວ່າເໝາະສົມແທດເໝາະກັບບັນດາຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ.

ເຈົ້າຂອງບັດມີໜ້າທີ່ພິຈາລະນາ ແລະ ອ່ານເນື້ອໃນຂອງບັນດາຂໍ້ກຳນົດ ແລະ ເງື່ອນໄຂນີ້ຢ່າງລະອຽດກ່ອນການນຳໃຊ້ບັດ.

## 1. ອະທິບາຍຄຳສັບ.

1.1. “Sacombank Lao”: ແມ່ນ ທະນາຄານໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ. ລວມມີ: ບັນດາສາຂາ, ໜ່ວຍບໍລິການ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຫລື ໄດ້ຮັບການມອບໝາຍຈາກທະນາຄານ.

1.2. “ບັດ”: ແມ່ນບັດສິນເຊື່ອ ອອກໂດຍ Sacombank Lao ໃຫ້ແກ່ເຈົ້າຂອງບັດ, ອະນຸຍາດໃຫ້ເຈົ້າຂອງບັດເຮັດບັນດາທຸລະກຳໃນຂອບເຂດວົງເງິນສິນເຊື່ອທີ່ໄດ້ຮັບອະນຸມັດຕາມການຕົກລົງລະຫວ່າງ ເຈົ້າຂອງບັດ ກັບ Sacombank Lao.

1.3. ໃບສະເໜີອະນຸມັດ ອອກບັດສິນເຊື່ອໃນຮູບແບບສັນຍາ (ເອີ້ນຫຍໍ້ວ່າໃບສະເໜີ): ແມ່ນໃບສະເໜີຕາມແບບຟອມຂອງ Sacombank Lao ລູກຄ້າຕ້ອງຂຽນຂໍ້ມູນຄົບຖ້ວນໃສ່ແບບຟອມ ແລະ ສົ່ງໃຫ້ Sacombank Lao ພິຈາລະນາວ່າເຫັນດີອະນຸມັດສິນເຊື່ອຫຼືບໍ່ ແລະ ໃບສະເໜີນີ້ເປັນສ່ວນໜຶ່ງຂອງສັນຍາ.

1.4. “ເຈົ້າຂອງບັດ”: ລວມມີ ເຈົ້າຂອງບັດຫລັກ ແລະ ບັດເສີມ(ຖ້າມີ).

1.5. “ເຈົ້າຂອງບັດຫຼັກ”: ແມ່ນບຸກຄົນທີ່ເຊັນໃນໃບສະເຫນີ, ເຊິ່ງໄດ້ຮັບການອະນຸມັດຈາກ Sacombank Lao ໃນການອອກບັດ ແລະ ແມ່ນບຸກຄົນທີ່ ຮັບຜິດຊອບຕໍ່ກັບທຸກທຸລະກຳຂອງບັດ, ດອກເບ້ຍ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບບັດ.

1.6. “ເຈົ້າຂອງບັດເສີມ”: ແມ່ນບຸກຄົນທີ່ໄດ້ຮັບການເຫັນດີຈາກເຈົ້າຂອງບັດຫລັກໃນການນຳໃຊ້ບັດເສີມທີ່ອອກໂດຍ Sacombank Lao ແລະ ເຈົ້າຂອງບັດຫລັກໄດ້ເຫັນດີເປັນລາຍລັກອັກສອນໃນພັນທະການຮັບຜິດຊອບທຸກລາຍຈ່າຍທີ່ກ່ຽວຂ້ອງໃນການນຳໃຊ້ບັດເສີມຕາມສັນຍາ.

1.7. “ລະຫັດຢັ້ງຢືນເຈົ້າຂອງບັດ - PIN”: ແມ່ນລະຫັດລັບ ທີ່ Sacombank Lao ອອກໃຫ້ແກ່ເຈົ້າຂອງບັດໃນເທື່ອທຳອິດ ແລະ ຫລັງຈາກນັ້ນເຈົ້າຂອງບັດຈະປ່ຽນລະຫັດຕາມຂັ້ນຕອນທີ່ໃຫ້ຢັ້ງຢືນເພື່ອນຳໃຊ້ລະຫັດໃນບາງທຸລະກຳ.

1.8. “OTP” (ລະຫັດທີ່ໃຊ້ໄດ້ເທື່ອດຽວ): ແມ່ນລະຫັດລັບທີ່ສາມາດນຳໃຊ້ໄດ້ເທື່ອດຽວ ແລະ ມີກຳນົດນຳໃຊ້ໃນໄລຍະເວລາໃດຫນຶ່ງ, ໃຊ້ເພື່ອຢັ້ງຢືນ ເວລາເຂົ້າໃນແອັບພິເຄຊັນ, ເຮັດທຸລະກຳ online ຫຼື ເຮັດທຸລະກຳຜ່ານ Internet Banking. OTP ຈະສົ່ງຜ່ານ SMS, TOKEN, Application SacomPay ຫຼື ການຢັ້ງຢືນອື່ນໂດຍ Sacombank Lao ເປີດໃຫ້ນຳໃຊ້ໃນແຕ່ລະໄລຍະ.

1.9. “ໃບແຈ້ງທຸລະກຳ”: ແມ່ນເອກະສານທີ່ອອກໂດຍ Sacombank Lao ເຊິ່ງໃນນັ້ນໄດ້ແຈ້ງທຸກທຸລະກຳ, ດອກເບ້ຍ, ຄ່າທຳນຽມ, ການປ່ຽນແປງ(ຖ້າມີ), ຈຳນວນເງິນຊຳລະຂັ້ນຕໍ່າ ແລະ ຍອດຫນີ້ທ້າຍງວດຂອງບັດ.

1.10. “ໄລຍະເວລາການແຈ້ງທຸລະກຳ”: ແມ່ນຊ່ວງໄລຍະເວລາລະຫວ່າງການອອກໃບແຈ້ງທຸລະກຳສອງຄັ້ງຕິດຕໍ່ກັນ.

1.11. “ຍອດໜີ້ທ້າຍງວດຂອງບັດ” (ເອີ້ນຫຍໍ້ວ່າ: ຍອດໜີ້): ແມ່ນຍອດໜີ້ທັງໝົດຂອງບັດລວມມີ: ທຸລະກຳທີ່ໄດ້ລົງບັນຊີແລ້ວ, ຄ່າທຳນຽມ ແລະ ດອກເບ້ຍທີ່ເກີດຂຶ້ນເທິງບັດ.

1.12. ຈຳນວນເງິນຮອດກຳນົດ: ແມ່ນຍອດໜີ້ທີ່ອອກໃນໃບແຈ້ງທຸລະກຳໃນງວດໄດ້ລະບຸໄວ້ໃນໃບແຈ້ງທຸລະກຳແຕ່ລະເດືອນ.

1.13. ເງິນຊຳລະຂັ້ນຕໍ່າ: ແມ່ນຈຳນວນເງິນຊຳລະຂັ້ນຕໍ່າທີ່ໄດ້ຂຽນໃນໃບແຈ້ງການທຸລະກຳເຊິ່ງເຈົ້າບັດຕ້ອງຊຳລະໃຫ້ Sacombank Lao ໃນມື້ ຫຼື ກ່ອນມື້ຮອດກຳນົດ.

1.14. ມື້ຮອດກຳນົດ: ແມ່ນໄລຍະເວລາສຸດທ້າຍທີ່ເຈົ້າຂອງບັດຕ້ອງຊຳລະຈຳນວນເງິນທີ່ຮອດກຳນົດ ຫຼື ຈຳນວນເງິນຂັ້ນຕໍ່າທີ່ໄດ້ລະບຸໄວ້ໃນໃບແຈ້ງທຸລະກຳໃນແຕ່ລະເດືອນ

1.15. ມື້ເຮັດວຽກ: ແມ່ນມື້ທີ່ບໍ່ແມ່ນ ວັນເສົາ, ວັນອາທິດ, ວັນພັກເທດສະການຂອງລາວ ແລະ ຕາມລະບຽບການພາຍໃນຂອງ Sacombank Lao.

1.16. “ຕູ້ ATM”: ແມ່ນອຸປະກອນທີ່ເຈົ້າຂອງບັດສາມາດນຳໃຊ້ເພື່ອເຮັດບັນດາທຸລະກຳຄື: ຝາກ, ເຕີມ, ຖອນເງິນສົດ, ໂອນເງິນ, ຊຳລະໃບບິນສິນຄ້າ, ບໍລິການ, ປ່ຽນລະຫັດ, ກວດສອບຂໍ້ມູນບັດ ຫຼື ບັນດາທຸລະກຳອື່ນ.

1.17. ຈຸດບໍລິການທີ່ຮັບຊຳລະດ້ວຍບັດ (Merchant): ແມ່ນອົງການຈັດຕັ້ງ, ບຸກຄົນທີ່ຕົກລົງຮັບຊຳລະຄ່າສິນຄ້າ, ບໍລິການດ້ວຍບັດ ຕາມສັນຍາທີ່ໄດ້ເຊັນນຳອົງການຮັບຊຳລະດ້ວຍບັດ.

1.18. ທຸລະກຳ: ປະກອບມີ ທຸລະກຳຊື້ສິນຄ້າ, ທຸລະກຳຊຳລະ Online, ທຸລະກຳຖອນເງິນສົດ, ທຸລະກຳທີ່ທຽບເທົ່າກັບການຖອນເງິນສົດ ແລະ ບັນດາທຸລະກຳຕ່າງໆທີ່ຖືກຕ້ອງຕາມກົດໝາຍໃນການນຳໃຊ້ບັດ.

1.19. ທຸລະກຳຊື້ສິນຄ້າ: ແມ່ນການນຳໃຊ້ບັດເພື່ອຊຳລະຄ່າສິນຄ້າ ແລະ/ຫຼື ໃຊ້ບໍລິການ.

1.20. “ທຸລະກຳຊຳລະ Online”: ແມ່ນການນຳໃຊ້ບັດເພື່ອຊຳລະຄ່າສິນຄ້າ, ບໍລິການທາງ Online ເທິງບັນດາ Website ທີ່ຮັບຊຳລະດ້ວຍບັດ.

1.21. ທຸລະກຳຖອນເງິນສົດ: ແມ່ນການນຳໃຊ້ບັດເພື່ອຖອນເງິນສົດຈາກຕູ້ ATM, ທະນາຄານ ຫຼື ບັນດາອົງການການເງິນອື່ນໆ.

1.22. ທຸລະກຳທຽບເທົ່າກັບການຖອນເງິນສົດ: ແມ່ນການນຳໃຊ້ບັດເພື່ອເຮັດບັນດາທຸລະກຳຊື້ສິນຄ້າທີ່ສາມາດປ່ຽນມາເປັນເງິນສົດໄດ້, ບັນດາທຸລະກຳທີ່ກ່ຽວຂ້ອງກັບການຫຼິ້ນເກມທີ່ມີລາງວັນ, ທຸລະກຳຊື້ເງິນຕາ, ທຸລະກຳໂອນເງິນຜ່ານອິນເຕີເນັດເຖິງບັນຊີຂອງ Sacombank ຫຼື ນອກລະບົບ Sacombank.

1.23. “ເລກບັດ”: ແມ່ນແຖວຕົວເລກທີ່ລວມມີ 16 ຕົວເລກພິມຢູ່ດ້ານໜ້າຂອງບັດ. ເຈົ້າຂອງບັດໃຊ້ເລກບັດເພື່ອເຮັດບັນດາທຸລະກຳທີ່ກ່ຽວຂ້ອງກັບຄຸນນະສົມບັດຂອງບັດ.

1.24. ເລກບັນຊີບັດ”: ແມ່ນແຖວຕົວເລກທີ່ລວມມີ 10 ຕົວເລກພິມຢູ່ດ້ານໜ້າຂອງບັດ ແລະ ໃນໃບຕິດຂັດບັດ. ເຈົ້າຂອງບັດນຳໃຊ້ເລກບັນຊີເພື່ອເຮັດທຸລະກຳຊຳລະຍອດໜີ້ບັດສິນເຊື່ອ ແລະ ສະໜອງໃນເວລາທີ່ທະນາຄານຕ້ອງການ.

1.25. ວົງເງິນສິນເຊື່ອ (ເອີ້ນຫຍໍ້ວ່າ: ວົງເງິນ) ແມ່ນວົງເງິນສູງສຸດຂອງບັດສິນເຊື່ອທີ່ເຫັນດີອະນຸມັດໃຫ້ໂດຍ Sacombank Lao (ລວມບັດທັງໝົດຂອງເຈົ້າຂອງບັດ).

1.26. ການຄໍ້າປະກັນ: ແມ່ນເງິນສົດ ຫຼື ຫຼັກຊັບຄໍ້າປະກັນອື່ນທີ່ເຈົ້າຂອງບັດ ແລະ/ຫຼື ຝ່າຍທີ່ 3 ສະໜອງໃຫ້, ໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກ Sacombank Lao ເພື່ອຄໍ້າປະກັນ ແລະ ປະຕິບັດທຸກພັນທະຂອງເຈົ້າຂອງບັດຕາມສັນຍາ.

1.27. ດອກເບ້ຍ: ແມ່ນດອກເບ້ຍໃຫ້ກູ້ຢືມທີ່ Sacombank Lao ນຳໃຊ້ໃນທຸກການກູ້ຢືມໃນການອອກບັດ, ປະກອບມີ: ດອກເບ້ຍປົກກະຕິ ແລະດອກເບ້ຍເກີນກຳນົດ. ດອກເບ້ຍປົກກະຕິ ແມ່ນດອກເບ້ຍໄດ້ໄລ່ຕາມຕາຕະລາງຄ່າທຳນຽມດອກເບ້ຍທີ່ Sacombank Lao ນຳໃຊ້ໃນແຕ່ລະໄລຍະ, ດອກເບ້ຍເກີນກຳນົດ ແມ່ນດອກເບ້ຍສູງສຸດເທົ່າກັບ 150% ຂອງດອກເບ້ຍປົກກະຕິ.

1.28. ໄລຍະເວລານຳໃຊ້ບັດ: ແມ່ນເວລາທີ່ເຈົ້າຂອງບັດສາມາດນຳໃຊ້ບັດ ແລະ ໄດ້ລະບຸໄວ້ເທິງບັດ.

1.29. ບຸກຄົນອ້າງອີງ: ແມ່ນບຸກຄົນທີ່ເປັນພີ່ນ້ອງ/ຄົນຮູ້ຈັກລົ້ງເຄີຍ/ເພື່ອນຮ່ວມງານ.. ຂອງເຈົ້າຂອງບັດ, ປົກກະຕິເຈົ້າຂອງບັດຈະໃຫ້ຂໍ້ມູນຢູ່ໃນເອກະ ສານຂໍອອກບັດເພື່ອໃຫ້ Sacombank ນຳໃຊ້ໃນຂັ້ນຕອນການອອກບັດ ແລະ ນຳໃຊ້ບັດ.

**ອອກບັດ**

## 2. ຄວາມຮັບຜິດຊອບຂອງເຈົ້າຂອງບັດ

2.1. Sacombank Lao ມີສິດສະຫງວນສິດ ແລະ ມີສິດຕັດສິນໃຈທຸກຢ່າງໂດຍບໍ່ຕ້ອງອອກແຈ້ງການກ່ອນ:

a) ເຫັນດີ ຫຼື ປະຕິເສດ ໃນການອອກບັດໃຫ້ເຈົ້າຂອງບັດເຖິງແມ່ນວ່າເຈົ້າຂອງບັດຈະຕອບສະໜອງຄົບຕາມເງື່ອນໄຂການອອກບັດທີ່ Sacombank Lao ກຳນົດ;

b) ປະຕິເສດບັນດາທຸລະກຳເຖິງແມ່ນວ່າຈະມີວົງເງິນພຽງພໍ ຫຼື ອະນຸມັດບັນດາທຸລະກຳເຖິງແມ່ນວ່າວົງເງິນບໍ່ພຽງພໍ;

c) ຢຸດຕິການນຳໃຊ້ບັດຂອງເຈົ້າຂອງບັດໄດ້ທຸກເວລາ ແລະ ບໍ່ວ່າຈະດ້ວຍເຫດຜົນໃດ;

d) ເພີ່ມ ຫຼື ຫຼຸດວົງເງິນ;

e) ປະຕິເສດການອອກບັດຄືນໃໝ່, ເຮັດໃໝ່, ປ່ຽນບັດໃໝ່ ຫຼື ຕໍ່ອາຍຸການນຳໃຊ້ບັດ;

f) ປ່ຽນແປງ, ປັບປຸງ, ຈຳກັດ ຫຼື ປະຕິເສດບັນດາທຸລະກຳ, ຄວາມສະດວກຕໍ່ກັບບັດຂອງເຈົ້າຂອງບັດ;

g) ເຫັນດີ ຫຼື ປະຕິເສດ ໃນການອອກບັດເສີມໃຫ້ເຈົ້າຂອງບັດເມື່ອເຈົ້າຂອງບັດມີຄວາມຕ້ອງການ. ກໍລະນີ Sacombank Lao ເຫັນດີອອກບັດເສີມໃຫ້ຕາມຄວາມຕ້ອງການຂອງເຈົ້າຂອງບັດ, ເລື່ອງເປີດນຳໃຊ້ບັດໝາຍເຖິງເຈົ້າຂອງບັດໄດ້ເຫັນດີນຳໃຊ້ບັດຕາມຄວາມຕ້ອງການກ່ອນໜ້ານັ້ນ.

2.2. Sacombank Lao ຈະບໍ່ຮັບຜິດຊອບ ຖ້າ Sacombank Lao ບໍ່ໄດ້ອະນຸມັດທຸລະກຳເທິງບັດຂອງເຈົ້າຂອງບັດ ແລະ/ຫຼື ຖ້າຫາກວ່າຜູ້ຂາຍສິນຄ້າບໍ່ຮັບບັດເຖິງວ່າບັດນັ້ນວົງເງິນພຽງພໍ.

2.3. Sacombank Lao ມີສິດກຳນົດຈຳນວນທຸລະກຳ ແລະ/ຫຼື ຈຳນວນເງິນເຮັດທຸລະກຳໃນມື້.

2.4. ຖ້າ Sacombank Lao ພົບເຫັນການນຳໃຊ້ທີ່ຜິດປົກກະຕິ ຫຼື ໜ້າສົງໃສຂອງບັດ, Sacombank Lao ສາມາດຮຽກຮ້ອງໃຫ້ເຈົ້າຂອງບັດຕິດຕໍ່ກັບ Sacombank Lao ແລະ/ຫຼື Sacombank Lao ສາມາດລະງັບບາງການນຳໃຊ້ ຫຼື ລະງັບທຸກການນຳໃຊ້ບັດຂອງເຈົ້າຂອງບັດຈົນກວ່າ Sacombank Lao ຈະກວດສອບໄດ້.

2.5. Sacombank Lao ສາມາດອະນຸມັດບັນດາທຸລະກຳທີ່ເຮັດໃຫ້ມູນຄ່າລວມຂອງທຸລະກຳນີ້ເກີນວົງເງິນ ແລະ ບັນດາຄວາມສ່ຽງນັ້ນແມ່ນເຈົ້າຂອງບັດເປັນຜູ້ຮັບຜິດຊອບເອງ.

**ນຳໃຊ້ບັດ**

## 3. ບັນດາພຶດຕິກຳທີ່ຖືກຫ້າມ

3.1. ເຮັດ, ນຳໃຊ້, ມອບໂອນ ແລະ ນຳໃຊ້ບັດປອມ;

3.2. ເຮັດທຸລະກຳບັດແບບສໍ້ໂກງ, ປອມແປງ; ທຸລະກຳທີ່ບໍ່ມີຈິງນຳຈຸດບໍລິການທີ່ຮັບຊຳລະດ້ວຍບັດ (ບໍ່ມີການຊື້ຂາຍສິນຄ້າ ແລະ ການບໍລິການ);

3.3. ໂຈນລະກຳ, ສົມຮູ້ຮ່ວມຄິດໃນການໂຈນລະກຳຂໍ້ມູນບັດ; ເປີດເຜີຍ ແລະ ໃຫ້ຂໍ້ມູນກ່ຽວກັບບັດ, ເຈົ້າຂອງບັດ ແລະ ເຮັດທຸລະກຳບັດບໍ່ຖືກຕ້ອງຕາມກົດໝາຍ;

3.4. ເຈົ້າຂອງບັດບຸກລຸກ ຫຼື ຊອກຫາວິທີບຸກລຸກທີ່ຜິດກົດໝາຍ, ທຳລາຍໂປຣແກຣມ ຫຼື ພື້ນຖານໂຄງລ່າງລະບົບອອກບັດ, ຊຳລະບັດ ແລະ ສະສາງທຸລະກຳບັດອີເລັກໂຕນິກ.

3.5. ນຳໃຊ້ບັດເພື່ອເຮັດບັນດາທຸລະກຳທີ່ມີເປົ້າໝາຍໃນການຟອກເງິນ, ສະໜັບສະໜູນການກໍ່ການຮ້າຍ, ຫຼອກລວງ, ສໍ້ໂກງ ແລະ ບັນດາທຸລະກຳຕ່າງໆທີ່ລະເມີດລະບຽບກົດໝາຍ.

## 4. ບັນດາກໍລະນີປະຕິເສດຊຳລະ, ຢຸດຕິຊົ່ວຄາວ ແລະ ຍຶດບັດ

Sacombank Lao/ຈຸດບໍລິການທີ່ຮັບຊຳລະດ້ວຍບັດ ມີສິດປະຕິເສດການຊຳລະດ້ວຍບັດ, ລະງັບບັດຊົ່ວຄາວ, ຍຶດບັດ ໃນບັນດາກໍລະນີລຸ່ມນີ້:

4.1. ທຸລະກຳບັດທີ່ບໍ່ແມ່ນເຈົ້າຂອງບັດເປັນຜູ້ເຮັດ;

4.2. ບັດປອມ;

4.3. ພົບເຫັນວ່າທຸລະກຳນັ້ນມີເນື້ອໃນທີ່ຂັດກັບລະບຽບກົດໝາຍ ຫຼື ຂັດກັບລະບຽບການໃຊ້ບັດ;

4.4. ບັດຖືກນຳໃຊ້ເຂົ້າໃນການເຮັດທຸລະກຳທີ່ຖືກຫ້າມ: ບັນດາທຸລະກຳທີ່ມີເປົ້າໝາຍໃນການຟອກເງິນ, ສະໜັບສະໜູນການກໍ່ການຮ້າຍ, ຫຼອກລວງ, ສໍ້ໂກງ ແລະ ບັນດາບັນດາທຸລະກຳຕ່າງໆທີ່ລະເມີດລະບຽບກົດໝາຍ; ທຸລະກຳທີ່ມີລັກສະນະສໍ້ໂກງປອມແປງ; ທຸລະກຳທີ່ບໍ່ມີຈິງນຳຈຸດບໍລິການທີ່ຮັບຊຳລະດ້ວຍບັດ (ບໍ່ມີການຊື້ຂາຍສິນຄ້າ ແລະ ການບໍລິການ);

4.5. ຮັບໃຊ້ການສືບສວນ, ຈັດການແກ້ໄຂອາຊະຍາກຳຕາມລະບຽບກົດໝາຍ;

4.6. ເຈົ້າຂອງບັດບໍ່ເຊັນ ແລະ/ຫລື ຂຽນຊື່ເທິງບັດ;

4.7. ບັດໄດ້ຖືກເຈົ້າຂອງບັດແຈ້ງວ່າບັດເສຍ;

4.8. ບັດໝົດອາຍຸການນຳໃຊ້;

4.9. ບັດຖືກລັອກ;

4.10. ເຈົ້າຂອງບັດລະເມີດສັນຍາ, ຂໍ້ຜູກພັນ ຫຼື ຂໍ້ຕົກລົງໃດໜຶ່ງທີ່ໄດ້ເຊັນນຳ Sacombank Lao;

4.11. ບັນດາກໍລະນີຕ່າງໆຕາມກົດລະບຽບຂອງ Sacombank Lao ແລະ/ຫຼື ກົດໝາຍ.

## 5. ທຸລະກຳການຊື້ສິນຄ້າ, ທຸລະກຳການຊຳລະ Online.

5.1 ເຈົ້າຂອງບັດສາມາດນຳໃຊ້ບັດເພື່ອເຮັດບັນດາທຸລະກຳຊື້ສິນຄ້າ, ທຸລະກຳຊຳລະຜ່ານບັດແບບ Online ຢູ່ທຸກຈຸດບໍລິການທີ່ຮັບຊຳລະດ້ວຍບັດ. ເຈົ້າຂອງບັດຕ້ອງໃຫ້ຂໍ້ມູນທີ່ຈຳເປັນ ແລະ ຄົບຖ້ວນຕາມທີ່ Sacombank Lao ຮຽກຮ້ອງເພື່ອຈະອະນຸມັດທຸລະກຳ. Sacombank Lao ມີສິດຈົດໜີ້ຕໍ່ກັບຈຳນວນເງິນທີ່ເຮັດທຸລະກຳການຊື້ສິນຄ້າ, ທຸລະກຳການຊຳລະ Online ຂອງເຈົ້າຂອງບັດ.

5.2. ເມື່ອເຮັດບາງທຸລະກຳຊຳລະ Online, ເຈົ້າຂອງບັນຊີຕ້ອງໃຊ້ລະຫັດຢັ້ງຢືນ(OTP).

5.3. Sacombank Lao ບໍ່ຮັບຜິດຊອບກ່ຽວກັບການຂົນສົ່ງ ຫຼື ຄຸນະພາບສິນຄ້າ ແລະ/ຫຼື ທຸລະກຳການຊື້ສິນຄ້າ, ທຸລະກຳການຊຳລະ Online ຂອງເຈົ້າຂອງບັດ.

5.4. ເຈົ້າຂອງບັດຕ້ອງຮັບຜິດຊອບກັບການຮ້ອງຟ້ອງ, ຂໍ້ຕົກລົງ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງໂດຍກົງກັບຈຸດບໍລິການທີ່ຮັບຊຳລະດ້ວຍບັດ.

## 6. ທຸລະກຳການຖອນເງິນສົດ ແລະ ທຸລະກຳທຽບເທົ່າກັບການຖອນເງິນສົດ

6.1. ເຈົ້າຂອງບັດສາມາດເຮັດທຸລະກຳຖອນເງິນສົດ ແລະ ທຸລະກຳທຽບເທົ່າກັບການຖອນເງິນສົດຢູ່ຕູ້ ATM, ຈຸດບໍລິການທີ່ຮັບຊຳລະດ້ວຍບັດ ແລະ ອົງການຊຳລະບັດ. ໃນກໍລະນີໃຊ້ບັດຢູ່ຕູ້ ATM ເຈົ້າຂອງບັດຕ້ອງໃຊ້ລະຫັດ (PIN).

6.2. Sacombank Lao ຈະບໍ່ຮັບຜິດຊອບກັບຜົນກະທົບ, ຄວາມເສຍຫາຍ ຫຼື ການສູນເສຍໃດໆ ທີ່ເກີດຂຶ້ນທີ່ກ່ຽວຂ້ອງກັບການນຳໃຊ້ບັດເພື່ອເຮັດທຸລະກຳຖອນເງິນສົດ ແລະ ທຸລະກຳທຽບເທົ່າການຖອນເງິນສົດຢູ່ຕູ້ ATM, ຈຸດບໍລິການທີ່ຮັບຊຳລະດ້ວຍບັດ ແລະ ອົງການຊຳລະບັດ, ແຕ່ບໍ່ລວມເຖິງວ່າເຈົ້າຂອງບັດບໍ່ໄດ້ຮັບ ຫຼື ຮັບບໍ່ຄົບຕາມຈຳນວນເງິນທີ່ຖອນ.

6.3. Sacombank Lao ມີສິດກຳນົດມູນຄ່າຂອງແຕ່ລະຄັ້ງທີ່ຖອນ ແລະ/ຫຼື ລວມບັນດາທຸລະກຳຖອນເງິນສົດໃນມື້ ແລະ/ຫຼື ຖ້າມີການປ່ຽນແປງອື່ນ Sacombank Lao ກໍ່ບໍ່ຈຳເປັນຕ້ອງແຈ້ງເຖິງເຈົ້າຂອງບັດ.

## 7. ແຈ້ງການ

7.1. ແຕ່ລະເດືອນ Sacombank Lao ຈະສົ່ງໃບແຈ້ງທຸລະກຳໃຫ້ເຈົ້າຂອງບັດຫນຶ່ງໃບຜ່ານຈົດໝາຍ ແລະ/ຫຼື ຜ່ານ email, ຜ່ານ SMS ຫຼື ທະນາຄານອີເລັກໂຕນິກ... ຕາມທີ່ຢູ່ທີ່ເຈົ້າຂອງບັດໄດ້ໃຫ້ຂໍ້ມູນໄວ້ ຫຼື ຜ່ານຮູບແບບອື່ນທີ່ Sacombank Lao ນຳໃຊ້ໃນແຕ່ລະໄລຍະ, ຍົກເວັ້ນຖ້າບໍ່ມີການເຄື່ອນໄຫວທຸລະກຳຂອງບັດ. ຖ້າຫາກວ່າເຈົ້າຂອງບັດໃຫ້ເບີໂທ, email ແລະ ຂໍ້ມູນທີ່ຢູ່ ທີ່ລົງທະບຽນໃນໃບສະເຫນີຜິດ, Sacombank Lao ຈະບໍ່ຮັບຜິດຊອບໃນກໍລະນີທີ່ຂໍ້ມູນບັນດາປະຫວັດຂອງການເຮັດທຸລະກຳບັດຮົ່ວໄຫຼ. ໃນມື້ສົ່ງໃບແຈ້ງທຸລະກຳແມ່ນ Sacombank Lao ເປັນຝ່າຍກຳນົດ ແລະ ຈະແຈ້ງໃຫ້ເຈົ້າຂອງບັດຮັບຮູ້ເມື່ອອອກບັດ.

7.2. ໃບແຈ້ງທຸລະກຳຈະຖືວ່າຖືກຕ້ອງຍົກເວັ້ນກໍລະນີເຈົ້າຂອງບັດມີການແຈ້ງການເປັນລາຍລັກອັກສອນ ຫຼື ຜ່ານໂທລະສັບ (hotline) ໃຫ້ Sacombank Lao ທຸກຄວາມຜິດພາດຢູ່ໃນໃບແຈ້ງທຸລະກຳພາຍໃນເວລາ 10 ມື້ນັບແຕ່ມື້ອອກໃບແຈ້ງທຸລະກຳ.

7.3. ການທີ່ບໍ່ໄດ້ຮັບໃບແຈ້ງທຸລະກຳ ຫຼື ໄດ້ຮັບໃບແຈ້ງທຸລະກຳຊ້າ ຈະບໍ່ໄດ້ຮັບການຍົກເວັ້ນວ່າເຈົ້າຂອງບັດຈະອອກຈາກພັນທະຊຳລະຂອງຕົນ ແລະ ເຈົ້າຂອງບັດຍັງຕ້ອງມີພັນທະຊຳລະຈຳນວນເງິນທີ່ຮອດກຳນົດ ຫຼື ຈຳນວນເງິນຂັ້ນຕໍ່າໃນມື້ ຫຼື ກ່ອນມື້ຮອດກຳນົດທີ່ໄດ້ລະບຸໄວ້ໃນໃບແຈ້ງທຸລະກຳ.

7.4. ທຸກການແຈ້ງການຂອງ Sacombank Lao ເຖິງເຈົ້າຂອງບັດຈະຖືກສົ່ງຈາກ Sacombank Lao ໃຫ້ເຈົ້າຂອງບັດໂດຍເປັນລາຍລັກອັກສອນຕາມທີ່ຢູ່ ຫຼື ຂໍ້ມູນລ້າສຸດທີ່ເຈົ້າຂອງບັດໄດ້ໃຫ້ໄວ້ຕອນທີ່ລົງທະບຽນນຳ Sacombank Lao, ຫຼື ແຈ້ງການເທິງ website ທາງການຂອງ Sacombank Lao ຫຼື ແຈ້ງການຜ່ານບັນດາສື່ມວນຊົນ ຫຼື ຕິດຢູ່ບັນດາສາຂາ/ຫນ່ວຍບໍລິການຂອງ Sacombank Lao. ທຸກການແຈ້ງການຈະຖືວ່າເຈົ້າຂອງບັດໄດ້ຮັບແລ້ວ:

a) ໃນໄລຍະ 10 ມື້ ເລີ່ມແຕ່ມື້ສົ່ງ (ຄິດໄລ່ຕາມກາຈໍ້າໄປສະນີທີ່ສົ່ງ) ຖ້າສົ່ງດ້ວຍຈົດໝາຍ; ຫຼື

b) ໃນມື້ທີ່ສົ່ງໄປ ຖ້າສົ່ງດ້ວຍ fax, telex, ອີເມວ ທີ່ເຈົ້າຂອງບັດໄດ້ລົງທະບຽນນຳ Sacombank Lao; ຫຼື

c) ໃນມື້ຮັບຖ້າສົ່ງຜ່ານ SMS ອັດຕະໂນມັດ, ໂທລະສັບມືຖືໂດຍກົງ, ສົ່ງໂດຍກົງ; ຫລື

d) ມື້ແຈ້ງການເທິງ Website ຫຼັກຂອງ Sacombank Lao ຫຼື ແຈ້ງການຜ່ານບັນດາສື່ມ່ວນຊົນ ຫຼື ມື້ທີ່ຕິດແຈ້ງການຫຢູ່ໃນລະບົບຂອງ Sacombank Lao.

7.5. ເຈົ້າຂອງບັດສາມາດຕິດຕໍ່ Sacombank Lao Lao ຜ່ານເບີໂທລະສັບ 021.264.222 ເພື່ອຈະໄດ້ຮັບການປຶກສາ, ແກ້ໄຂຂໍ້ຄາໃຈເຖິງບັນດາຜະລິດຕະພັນ ຫຼື ບໍລິການ (ທີ່ກ່ຽວຂ້ອງກັບບັດ) ໂດຍ Sacombank Lao ເປັນຜູ້ສະໜອງໃຫ້ ຍົກເວັ້ນຄວາມຮຽກຮ້ອງທີ່ນອກເໜືອຄວາມສາມາດຂອງ Sacombank Lao (ລວມທັງແຕ່ບໍ່ຈຳກັດຄວາມຜິດພາດຍ້ອນຄວາມຜິດຂອງເຈົ້າຂອງບັດເມື່ອເຮັດທຸລະກຳ, ຄວາມຜິດຂອງຝ່າຍທີສາມ ຫຼື ຄວາມຮຽກຮ້ອງທີ່ບໍ່ສົມເຫດສົມຜົນອື່ນຂອງເຈົ້າຂອງບັດ).

7.6. ເຈົ້າຂອງບັດຈະຕ້ອງຊົດໃຊ້ໃຫ້ Sacombank Lao ຕໍ່ກັບຄວາມເສຍຫາຍທຸກຢ່າງຖ້າຫາກວ່າເນື້ອໃນທີ່ຢູ່ໃນ e-mail, ຫຼື ໃນທຸກຮູບການໃດ, ຖືກຮັບໂດຍບຸກຄົນໃດທີ່ບໍ່ແມ່ນເຈົ້າຂອງບັດ.

## 8. ສິດເປັນເຈົ້າຂອງບັດ

8.1. ບັດເປັນຊັບສົມບັດຜູກຂາດຂອງ Sacombank Lao ແລະ ເຈົ້າຂອງບັດບໍ່ມີສິດມອບໂອນໄດ້. ບັດຈະສາມາດໃຊ້ໄດ້ແຕ່ມື້ອອກບັດ ຫຼື ມື້ໄດ້ອອກບັດຄືນຈົນຮອດມື້ສຸດທ້າຍຂອງເດືອນໝົດອາຍຸການນຳໃຊ້ຂອງບັດນັ້ນ. ມີພຽງແຕ່ເຈົ້າຂອງບັດໄດ້ນຳໃຊ້ບັດ, PIN ແລະ/ຫຼື OTP ຂອງຕົນຕາມຄວາມຕ້ອງການເພື່ອເຮັດບັນດາທຸລະກຳ.

8.2. ເຈົ້າຂອງບັດຈະບໍ່ໄດ້ນຳໃຊ້ບັດຫລັງຈາກບັດໝົດອາຍຸການນຳໃຊ້ ຫຼື ຢຸດຕິການນຳໃຊ້ບັດ; ການຍັງສືບຕໍ່ນຳໃຊ້ບັດຕາມເນື້ອໃນທີ່ກ່າວມານີ້ຈະຖືວ່າແມ່ນການການກະທຳແບບສໍ້ໂກງຂອງເຈົ້າຂອງບັດ. Sacombank Lao ມີສິດຕັດສິນໃນການປ່ຽນເລກບັດ ແລະ/ຫຼື ມື້ໝົດອາຍຸການນຳໃຊ້ເມື່ອອອກບັດຄືນໃໝ່ ຫຼື ປ່ຽນບັດໃໝ່ໃຫ້ເຈົ້າຂອງບັດ. ເຈົ້າຂອງບັດຮັບຜິດຊອບແຈ້ງການການປ່ຽນແປງນີ້ໃຫ້ຝ່າຍໃດໆທີ່ເຈົ້າຂອງບັດສາມາດຊຳລະທຸລະກຳໄດ້. Sacombank Lao ຈະບໍ່ຮັບຜິດຊອບຕໍ່ຜົນກະທົບໃດໆທີ່ເກີດຂຶ້ນຈາກທຸລະກຳຕ່າງໆທີ່ຖືກປະຕິເສດ, ເຖິງແມ່ນວ່າໄປຕາມເລກບັດເກົ່າ ຫຼື ກໍລະນີອື່ນໆ.

8.3. ຄວາມຮັບຜິດຊອບຂອງເຈົ້າຂອງບັດຕໍ່ Sacombank Lao ແມ່ນເດັດຂາດ, ບໍ່ວ່າຂໍ້ຂັດແຍ່ງໃດໆລະຫວ່າງເຈົ້າຂອງບັດກັບອົງການໃດໜຶ່ງ ຫຼື ບຸກຄົນໃດໜຶ່ງຈະບໍ່ມີອິດທິພົນຕໍ່ພັນທະບັດຂອງເຈົ້າຂອງບັດທີ່ຍັງຄົງຄ້າງກັບ Sacombank Lao.

## 9. ຄຳແນະນຳຂອງເຈົ້າຂອງບັດຕໍ່ກັບ Sacombank Lao

9.1. ເຈົ້າຂອງບັດຕົກລົງເຫັນດີວ່າ Sacombank Lao ຈະປະຕິບັດວຽກງານທີ່ Sacombank Lao ຖືວ່າເໝາະສົມກັບຄຳແນະນຳຂອງເຈົ້າຂອງບັດຕໍ່ກັບ Sacombank Lao. ການແນະນຳຂອງເຈົ້າຂອງບັດອາດຈະມາໃນຮູບແບບແຈ້ງການ ຫຼື ລົມກັບ Sacombank Lao ໃນແຕ່ລະໄລຍະໂດຍຜ່ານຈົດໝາຍ, ໂທລະສັບ, telex, fax.

9.2. ເຖິງຢ່າງໃດກໍ່ຕາມ, Sacombank Lao ມີສິດຮຽກຮ້ອງວ່າໃນການແນະນຳຂອງເຈົ້າຂອງບັດຕ້ອງໄດ້ຂຽນຢ່າງລະອຽດຕາມແບບຟອມເພື່ອສົ່ງໄປ ຫຼື ຄຳແນະນຳນີ້ຕ້ອງໄດ້ຢັ້ງຢືນດ້ວຍການບັນທຶກເປັນລາຍລັກອັກສອນ ຫຼືພາຍໃຕ້ຮູບແບບອື່ນກ່ອນທີ່ Sacombank Lao ດຳເນີນການໂດຍອີງໃສ່ຄຳແນະນຳນີ້.

Sacombank Lao ມີສິດຈັດການການແນະນຳຂອງເຈົ້າຂອງບັດຄືກັບການມອບສິດຢ່າງເຕັມຕົວ ແລະ ເຈົ້າຂອງບັດຕ້ອງໄດ້ຮັບຜິດຊອບຕໍ່ກັບການປະຕິບັດບັນດາຂັ້ນຕອນກ່ຽວຂ້ອງກັບຄຳແນະນຳດັ່ງກ່າວ.

## 10. ການນຳໃຊ້/ ການອັບເດດ/ ການສະໜອງຂໍ້ມູນ

10.1. ເຈົ້າຂອງບັດຕ້ອງໄດ້ເຊັນຊື່ເທິງບັດທັນທີທີ່ຮັບບັດ.

10.2. ເຈົ້າຂອງບັດຕ້ອງແຈ້ງການໃຫ້ Sacombank Lao ທັນທີຖ້າຫາກວ່າມີການປ່ຽນແປງກ່ຽວກັບຂໍ້ມູນຂອງເຈົ້າຂອງບັດ ທຽບກັບຂໍ້ມູນທີ່ໄດ້ລົງທະບຽນໄວ້ກ່ອນໜ້ານີ້ກັບ Sacombank Lao ແລະ/ຫລື ມີການຮຽກຮ້ອງຈາກ Sacombank Lao. Sacombank Lao ຈະບໍ່ຮັບຜິດຊອບໃດໆໃນກໍລະນີເຈົ້າຂອງບັດບໍ່ສະໜອງຂໍ້ມູນຄົບຖ້ວນ, ຖືກຕ້ອງບັນດາຂໍ້ມູນຂອງເຈົ້າຂອງບັດເມື່ອມີການປ່ຽນແປງ ແລະ/ຫຼື ຕາມຄວາມຕ້ອງການຂອງ Sacombank Lao.

10.3. ເຈົ້າຂອງບັດມີສິດຮຽກຮ້ອງ Sacombank Lao ສະໜອງຂໍ້ມູນກ່ຽວກັບວົງເງິນຂອງບັດ, ປະຫວັດທຸລະກຳຂອງບັດ ແລະ ຂໍ້ມູນຕ່າງໆທີ່ກ່ຽວ ຂ້ອງກັບບັດ.

10.4. ເຈົ້າຂອງບັດຕົກລົງໃຫ້ Sacombank Lao ຫຼື ຝ່າຍໃດຝ່າຍໜຶ່ງເຊິ່ງຕາງໜ້າ Sacombank Lao ນຳໃຊ້; ຮັກສາ, ສະໜອງ ຫຼື ແລກປ່ຽນຂໍ້ມູນຕ່າງໆກ່ຽວກັບເຈົ້າຂອງບັດ, ບັດ, ທຸລະກຳຂອງບັດ ແລະ/ຫຼື ຂໍ້ມູນໃດໆທີ່ກ່ຽວຂ້ອງລວມໄປເຖິງຂໍ້ມູນສິນເຊື່ອຂອງເຈົ້າຂອງບັດ ກັບປັດໃຈໃດໜຶ່ງທີ່ Sacombank Lao ເຫັນວ່າເໝາະສົມ.

10.5. ເຈົ້າຂອງບັດຫຼັກມີສິດຮຽກຮ້ອງປ່ຽນແປງຂໍ້ມູນທັງໝົດທີ່ກ່ຽວຂ້ອງກັບບັດ/ເຈົ້າຂອງບັດ (ຍົດເວັ້ນບັນດາຂໍ້ມູນສ່ວນຕົວກ່ຽວຂ້ອງກັບເຈົ້າຂອງບັດເສີມ), ເຈົ້າຂອງບັດເສີມມີສິດພຽງແຕ່ໄດ້ປ່ຽນແປງຂໍ້ມູນສ່ວນຕົວຄື: ບັດປະຈຳຕົວ/ໜັງສືຜ່ານແດນ, ທີ່ຢູ່ , ເບີໂທລະສັບ.

10.6. ເຈົ້າຂອງບັດຫຼັກມີສິດຮຽກຮ້ອງ Sacombank Lao ສະໜອງຂໍ້ມູນກ່ຽວກັບວົງເງິນນຳໃຊ້ບັດ, ປະຫວັດທຸລະກຳ ແລະ ຂໍ້ມູນຕ່າງໆທີ່ກ່ຽວກັບບັດ (ລວມທັງບັດຫຼັກ ແລະ ບັດເສີມ). ເຈົ້າຂອງບັດເສີມມີສິດຮຽກຮ້ອງ Sacombank Lao ສະໜອງຂໍ້ມູນກ່ຽວກັບວົງເງິນຂອງບັດ, ປະຫວັດທຸລະກຳ ແລະ ບັນດາຂໍ້ມູນທີ່ຕ້ອງການກ່ຽວກັບບັດເສີມຂອງຕົນ.

## 11. ເຫດສຸດວິໄສ

11.1 ເຫດສຸດວິໄສລວມມີແຕ່ບໍ່ກຳນົດບັນດາເຫດການເຊັ່ນ: ໄພທຳມະຊາດ; ສົງຄາມ; ໄຟຟ້າຂັດຂ້ອງ, ຄວາມເປ່ເພ/ຄວາມຜິດພາດຂອງ ATM, POS ຫຼື ເຄື່ອງຈັກ, ອຸປະກອນອື່ນໆ ເພື່ອຮັບໃຊ້ໃຫ້ວຽກງານບັດ ຫຼື ລະບົບຈັດການຂໍ້ມູນ ຫຼື ລະບົບສື່ສານ Internet ຫຼື ບໍລິການແລກປ່ຽນຂໍ້ມູນ; ຕາມຄຳຮຽກຮ້ອງຂອງອົງການຈັດຕັ້ງພາກລັດທີ່ມີສິດອຳນາດ; ການປ່ຽນແປງທາງກົດຫມາຍ; ບັນດາເຫດການອື່ນນອກເຫນືອການຄວບຄຸມຂອງແຕ່ລະຝ່າຍ.

11.2 ເມື່ອເກີດມີເຫດການສຸດວິໄສ, ສອງຝ່າຍຈະຢຸດຕິຊົ່ວຄາວການປະຕິບັດຕາມສັນຍາ, Sacombank Lao ຈະເຮັດແຈ້ງການໃຫ້ເຈົ້າຂອງບັດໂດຍວິທີໃດຫນຶ່ງທີ່ໄດ້ກຳນົດໃນມາດຕາ 7.4 ແລະ ຈະບໍ່ເກີດມີພັນທະຮັບຜິດຊອບໃນການທົດແທນຕໍ່ກັບເຈົ້າຂອງບັດ, ຝ່າຍທີສາມ. ພ້ອມດຽວກັນນັ້ນເຈົ້າຂອງບັດມີພັນທະຊຳລະຍອດໜີ້ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກຳນົດຕາມການຮຽກຮ້ອງຂອງ Sacombank Lao. ເມື່ອສິ້ນສຸດບັນດາເຫດສຸດວິໄສ, ແຕ່ລະຝ່າຍຈະສືບຕໍ່ປະຕິບັດເນື້ອໃນຕາມສັນຍາ.

## 12. ບັດເສຍ, ເປ່ເພ ຍ້ອນຄວາມຜິດພາດທາງເຕັກນິກ, ຂໍ້ມູນຮົ່ວໄຫລ ຫລື ຖືກສວຍໃຊ້

12.1. ໃນກໍລະນີບັດເສຍ ຫຼື ຂໍ້ມູນບັດຮົ່ວໄຫລ ຫຼື ຖືກນຳໃຊ້ໂດຍບຸກຄົນອື່ນເຊິ່ງບໍ່ແມ່ນເຈົ້າຂອງບັດ, ເຈົ້າຂອງບັດ ຫຼື ຜູ້ຖືກມອບສິດຈາກເຈົ້າຂອງບັດຕ້ອງແຈ້ງການໃຫ້ Sacombank Lao ທັນທີຜ່ານ hotline ຕະຫລອດ 24/7, ໂດຍການສົ່ງ SMS ຫຼື ຜ່ານທະນາຄານ ອີເລັກໂຕຣນິກຕາມລະບຽບການ.

12.2. ເມື່ອໄດ້ຮັບແຈ້ງຈາກເຈົ້າຂອງບັດ, Sacombank Lao ຈະດຳເນີນການລັອກບັດທັນທີ ແລະ ປະສານງານກັບບັນດາຝ່າຍທີ່ກ່ຽວຂ້ອງເພື່ອດຳເນີນການທີ່ຈຳເປັນເພື່ອສະກັດກັ້ນບັນດາຄວາມເສຍຫາຍທີ່ອາດເກີດຂຶ້ນ, Sacombank Lao ຈະຢຸດຕິການນຳໃຊ້ບັດຊົ່ວຄາວຂອງເຈົ້າຂອງບັດຈົນກວ່າເຈົ້າຂອງບັດ ຫຼື ຜູ້ໄດ້ຮັບມອບສິດຈະຂຶ້ນມາທະນາຄານຮຽກຮ້ອງໃຫ້ເປີດລັອກບັດ ແລະ/ຫລື ປ່ຽນບັດໃຫມ່, ປິດບັດ (ຖ້າມີ). ໄລຍະເວລາ Sacombank Lao ສຳເລັດການແກ້ໄຂໃຫ້ເຈົ້າຂອງບັດແມ່ນບໍ່ເກີນ 5 ມື້ເຮັດວຽກຕໍ່ກັບບັດທີ່ມີ BIN ໂດຍ Sacombank Lao ອອກໃຫ້ ຫຼື 10 ມື້ເຮັດວຽກຕໍ່ກັບບັດທີ່ມີ BIN ໂດຍອົງການຊຳລະສະສາງສາກົນອອກໃຫ້ນັບແຕ່ມື້ໄດ້ຮັບແຈ້ງຈາກເຈົ້າຂອງບັດ.

12.3. ເຈົ້າຂອງບັດຈະສືບຕໍ່ ຮັບຜິດຊອບກັບທຸກທຸລະກຳບັດ ທີ່ໄດ້ເຮັດກ່ອນທີ່ Sacombank Lao ໄດ້ຮັບແຈ້ງຈາກເຈົ້າຂອງບັດ ແລະ ດຳເນີນການລ໋ອກບັດ. ບໍ່ວ່າຈະໃນກໍລະນີໃດ, ເຈົ້າຂອງບັດຕ້ອງຮັບຜິດຊອບໃນການນຳໃຊ້ບັດທັງໝົດ, ບໍ່ກຳນົດຖ້າເຈົ້າຂອງບັດໄດ້ສໍ້ໂກງ ຫຼື ລະຫຼວມໃນການນຳໃຊ້ບັດ ຫຼື ເກັບຮັກສາບັດ ແລະ ລາຍລະອຽດບັດບໍ່ປອດໄພ. ເຈົ້າຂອງບັດຕ້ອງສະໜອງຂໍ້ມູນ ຫຼື ຫຼັກຖານທັນທີຕາມການຮຽກຮ້ອງທີ່ເໝາະສົມຂອງ Sacombank Lao ເພື່ອຊ່ວຍໃນການສືບສວນການສວຍໃຊ້ບັດ.

12.4. ສຳລັບບັດທີ່ໄດ້ແຈ້ງວ່າເສຍ, ຖ້າເຈົ້າຂອງບັດພົບເຫັນບັດເຊິ່ງກ່ອນໜ້ານີ້ໄດ້ແຈ້ງວ່າບັດເສຍ ເຈົ້າຂອງບັດຫ້າມສືບຕໍ່ນຳໃຊ້ບັດ ຫຼື ໃຫ້ຜູ້ອື່ນນຳໃຊ້ ແລະ ບໍ່ວ່າກໍລະນີໃດ, ບັດນັ້ນກໍ່ຕ້ອງໃຫ້ເຈົ້າຂອງບັດຕັດມຸ່ນ ຫຼື ມອບບັດນັ້ນຄືນໃຫ້ Sacombank Lao. ກໍລະນີເຈົ້າຂອງບັດຊອກເຫັນບັດ ແລະ ຮຽກຮ້ອງຈະນຳໃຊ້ບັດຖືກລັອກກ່ອນໜ້ານັ້ນຄືນ, Sacombank Lao ມີສິດແຕ່ບໍ່ມີພັນທະເຫັນດີຕາມຄວາມຕ້ອງການຂອງເຈົ້າຂອງບັດ. ພ້ອມກັນນັ້ນ, ຖ້າ Sacombank Lao ເຫັນດີນຳການຮຽກຮ້ອງມາຂ້າງເທິງນີ້, ເຈົ້າຂອງບັດຕ້ອງຮັບຜິດຊອບເອງກ່ຽວກັບທຸກຄວາມສ່ຽງທີ່ອາດເກີດຂຶ້ນຍ້ອນການນຳໃຊ້ບັດທີ່ໄດ້ແຈ້ງວ່າເສຍ ແລະ ໃຫ້ຄຳໝັ້ນສັນຍາຕໍ່ກັບທະນາຄານວ່າຈະບໍ່ມີການຟ້ອງຮ້ອງໃດໆກັບ Sacombank Lao ເຖິງບັນຫານີ້. ມາດຕານີ້ບໍ່ນຳໃຊ້ຖ້າເຈົ້າຂອງບັດມີຄວາມຕ້ອງການອອກບັດໃໝ່.

12.5. ເຈົ້າຂອງບັດຕ້ອງຊົດໃຊ້ໃຫ້ Sacombank Lao ເຖິງຄວາມສູນເສຍ ຫຼື ຄວາມເສຍຫາຍທຸກຢ່າງ ທີ່ເກີດຂຶ້ນຈາກການເປີດ ແລະ ນຳໃຊ້ບັດ ຫຼື PIN ທີ່ Sacombank Lao ຕ້ອງຮັບຜິດຊອບ.

12.6. ກໍລະນີບັດເປ່ເພຍ້ອນຄວາມຜິດພາດທາງເຕັກນິກ, Sacombank Lao ຈະປ່ຽນບັດ ຫຼື ອອກບັດໃໝ່ໃຫ້ລູກຄ້າໂດຍບໍ່ເສຍຄ່າທຳນຽມ.

12.7. ກໍລະນີບັດຖືກສວຍໃຊ້ປະໂຫຍດ, ເກີດຄວາມເສຍຫາ, Sacombank Lao ແລະ ເຈົ້າຂອງບັດແບ່ງຄວາມຮັບຜິດຊອບ ແລະ ເຈລະຈາວິທີແກ້ໄຂເຖິງຜົນກະທົບ. ກໍລະນີທັງສອງຝ່າຍບໍ່ສາມາດຕົກລົງກັນ, ການແກ້ໄຂຈະຖືກດຳເນີນຕາມລະບຽບກົດໝາຍ.

12.8. ກໍລະນີເຈົ້າຂອງບັດເຮັດບັດເສຍ ຫຼື ເປ່ເພ, ສະເໜີຂໍອອກບັດໃໝ່ແມ່ນເຈົ້າຂອງບັດຕ້ອງຈ່າຍຄ່າທຳນຽມປ່ຽນບັດຕາມລະບຽບການຂອງ Sacombank Lao ໃນແຕ່ລະໄລຍະ. Sacombank Lao ມີສິດຈົດໜີ້ເທິງບັດຂອງເຈົ້າຂອງບັດເພື່ອຊຳລະຄ່າທຳນຽມປ່ຽນບັດໃໝ່ ແລະ ຄ່າທຳນຽມອື່ນທີ່ກ່ຽວຂ້ອງ.

## 13. ລະງັບ, ຢຸດຕິການນຳໃຊ້ບັດ

13.1. ກໍລະນີທີ່ຢຸດຕິການນຳໃຊ້ບັດ:

a) ຖ້າເຈົ້າຂອງບັດລະເມີດກົດລະບຽບຢູ່ຂໍ້ກຳນົດ, ເງື່ອນໄຂນີ້ ຫຼື ຄຳໝັ້ນສັນຍາ, ຂໍ້ຕົກລົງ, ສັນຍາໃດໜຶ່ງທີ່ໄດ້ເຊັນກັບ Sacombank Lao;

b) ບັດໝົດອາຍຸການນຳໃຊ້ ແລະ ບໍ່ໄດ້ຕໍ່;

c) ບັດມີການກ່ຽວຂ້ອງເຖິງບັນດາກໍລະນີບັດປອມ;

d) ເຈົ້າຂອງບັດມີຄວາມຕ້ອງການຢຸດຕິການນຳໃຊ້ບັດ;

e) ຕາມຄວາມຮຽກຮ້ອງຂອງອົງການລັດມີສິດອຳນາດ;

f) Sacombank Lao ມີສິດເປັນເຈົ້າການຕັດສິນໃຈ ແລະ ບໍ່ຈຳເປັນຕ້ອງແຈ້ງການໃຫ້ເຈົ້າຂອງບັດຮູ້ກ່ອນໃນການຢຸດຕິການອອກບັດ ແລະ ການນຳໃຊ້ບໍ່ວ່າເວລາໃດ ຫຼື ດ້ວຍເຫດຜົນໃດ.

13.2. ເຈົ້າຂອງບັດສາມາດຮຽກຮ້ອງໃຫ້ລະງັບ, ຢຸດຕິການນຳໃຊ້ບັດ. ການລະງັບມີຜົນສັກສິດເມື່ອ Sacombank Lao ໄດ້ຮັບການສະເໜີຈາກເຈົ້າຂອງບັດ. ພ້ອມກັນນັ້ນ Sacombank Lao ຈະລະງັບການນຳໃຊ້ບັດເມື່ອໄດ້ຮັບການສະເໜີລະງັບຈາກເຈົ້າຂອງບັດ.

13.3. ເຈົ້າຂອງບັດຫຼັກມີສິດຝ່າຍດຽວໃນການຢຸດຕິການນຳໃຊ້ບັດດ້ວຍການແຈ້ງເປັນລາຍລັກອັກສອນໃຫ້ Sacombank Lao ກ່ອນ, ຢ່າງຕໍ່າ 10 ວັນ ທຽບໃສ່ມື້ທີ່ຢາກຢຸດຕິໃນເອກະສານແຈ້ງການ. ເຈົ້າຂອງບັດຫຼັກສາມາດມີສິດຝ່າຍດຽວໃນການລະງັບ, ຢຸດຕິການນຳໃຊ້ບັດຂອງເຈົ້າຂອງບັດເສີມ ແຕ່ເຈົ້າຂອງບັດເສີມບໍ່ມີສິດຮຽກຮ້ອງໃຫ້ລະງັບ, ຢຸດຕິການນຳໃຊ້ບັດຂອງເຈົ້າຂອງບັດຫຼັກ. ເຈົ້າຂອງບັດຫຼັກຢຸດຕິການນຳໃຊ້ບັດຂອງຕົນກໍຄືການຢຸດຕິສັນຍາທັງໝົດ. ເຈົ້າຂອງບັດຕົກລົງເຫັນດີວ່າ Sacombank Lao ສາມາດຕັດສິນໃຈ ແລະ ບໍ່ຕ້ອງແຈ້ງໃຫ້ເຈົ້າຂອງບັດກ່ອນລ່ວງໜ້າກ່ຽວກັບການລະງັບ ຫຼື ຢຸດຕິການອອກບັດ ແລະ ການນຳໃຊ້ບໍ່ວ່າເວລາໃດ ຫຼື ດ້ວຍເຫດຜົນໃດ. ໃນກໍລະນີລະງັບການນຳໃຊ້ບັດ, ເຈົ້າຂອງບັດມີພັນທະຊຳລະຍອດໜີ້ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກຳນົດຕາມ ການຮຽກຮ້ອງຂອງ Sacombank Lao.

13.4. ຫລັງຈາກການຢຸດຕິການນຳໃຊ້ບັດມີຜົນສັກສິດ:

a) ເຈົ້າຂອງບັດຕົກລົງຢຸດຕິ ການນຳໃຊ້ບັດ ແລະ ບັດຈະຖືກເກັບຄືນມາໂດຍ Sacombank Lao ຫຼື ອົງການໃດໜຶ່ງທີ່ Sacombank Lao ມອບສິດໃຫ້, ຢ່າງໃດກໍຕາມເຈົ້າຂອງບັດຈະຕ້ອງສືບຕໍ່ຮັບຜິດຊອບຊຳລະທຸລະກຳທັງໝົດ, ຄ່າທຳນຽມ, ຄ່າໃຊ້ຈ່າຍ, ຄ່າປັບໄໝ ແລະ ລວມທັງການຊົດເຊີຍຄວາມເສຍຫາຍອື່ນໆທັງໝົດທີ່ໄດ້ເຮັດກ່ອນ ຫຼື ຫຼັງການຢຸດຕິການນຳໃຊ້ບັດ (ລວມທັງຄ່າໃຊ້ຈ່າຍ ແລະ ຄ່າທຳນຽມທີ່ຍັງບໍ່ທັນໄດ້ສະແຈ້ງເທິງບັດ);

b) ວົງເງິນຂອງເຈົ້າຂອງບັດຈະຖືກຢຸດຕິ, ຍອດໜີ້ຂອງເຈົ້າຂອງບັດລວມທັງຄ່າທຳນຽມ ແລະ ດອກເບ້ຍຂອງບັນດາທຸລະກຳຈະຮອດກຳນົດທັນທີ ແລະ ຕ້ອງໄດ້ຊຳລະໂດຍບໍ່ຕ້ອງມີແຈ້ງການ ຫຼື ຮຽກຮ້ອງຊຳລະຈາກ Sacombank Lao. ການຊຳລະຍອດໜີ້ໃນກໍລະນີຢຸດຕິການນຳໃຊ້ບັດຈະໄດ້ປະຕິບັດຕາມກົດໝາຍ ແລະ ກົດລະບຽບພາຍໃນຂອງ Sacombank Lao;

c) ດັ່ງນັ້ນ, Sacombank Lao ຈະບໍ່ຮັບຜິດຊອບນຳພັນທະໃດໆຕໍ່ເຈົ້າຂອງບັດຕາມກົດລະບຽບ ຫຼື ກ່ຽວຂ້ອງກັບສັນຍາ;

d) ຜົນສັກສິດຂອງສັນຍາ ແລະ ຂໍ້ກຳນົດ ແລະ ເງື່ອນໄຂຂອງມັນ ຈະສືບຕໍ່ມີຜົນສັກສິດຮອດມື້ເຈົ້າຂອງບັດປະຕິບັດສຳເລັດ ແລະ ຄົບຖ້ວນພັນທະທາງດ້ານການເງິນຕໍ່ກັບ Sacombank Lao.

13.5. ການປົດອາຍັດຫຼັກຊັບຄໍ້າປະກັນຂອງເຈົ້າຂອງບັດຈະໄດ້ດຳເນີນຫຼັງຈາກ 60 ວັນ ນັບແຕ່ມື້ຢຸດຕິການນຳໃຊ້ບັດ ແລະ ເຈົ້າຂອງບັດໄດ້ໝົດພັນທະຊຳລະຂອງຕົນຕາມມາດຕາ 13.4 ຂໍ້ b ນີ້.

13.6. ທຸກຍອດມີສິນເຊື່ອທີ່ຍັງຄົງຄ້າງໃນບັດທີ່ປິດໄປແລ້ວ, ຫຼັງ 6 ເດືອນຖ້າບໍ່ມີໃຜມາຮັບຈະກາຍເປັນຊັບສິນຂອງ Sacombank Lao.

## 14. ການໂອ້ລົມຜ່ານໂທລະສັບ

ເຈົ້າຂອງບັດ/ບຸກຄົນອ້າງອີງ ຕົກລົງເຫັນດີນຳກັນວ່າການໂທລົມ ຫຼື ຮັບສາຍຈາກ Sacombank Lao ຫຼື ຝ່າຍທີ 3 ທີ່ໄດ້ຮັບມອບສິດ, Sacombank Lao ຫຼື ຝ່າຍທີ 3 ທີ່ໄດ້ຮັບມອບສິດສາມາດຕັດສິນໃຈເອງໃນການອັດສຽງການສົນທະນາທັງໝົດນຳເຈົ້າຂອງບັດ/ບຸກຄົນອ້າງອີງ ຜ່ານໂທລະສັບ. ເພາະສະນັ້ນ, ເຈົ້າຂອງບັດ /ບຸກຄົນອ້າງອີງ ຕົກລົງເຫັນດີບັນດາການສົນທະນາດັ່ງກ່າວ, Sacombank Lao ຫຼື ຝ່າຍທີ 3 ທີ່ໄດ້ຮັບມອບສິດສາມາດນຳໃຊ້ເຂົ້າໃນຈຸດປະສົງຕ່າງໆ. ລວມໄປເຖິງການນຳໃຊ້ເປັນຫຼັກຖານໃນກໍລະນີທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ຫຼື ທຸກຂັ້ນຕອນການບໍລິຫານ.

## 15. ຮັບປະກັນຄວາມປອດໄພໃນການນຳໃຊ້ບັດ.

15.1. Sacombank Lao (ຫຼື ການປະສານງານກັບບັນດາອົງການຊຳລະບັດ, ອົງການ Switch ບັດ, ອົງການຊຳລະເອເລັກໂຕຣນິກ) ຈະປະຕິບັດຕາມມາດຕະການເພື່ອຮັບປະກັນຄວາມປອດໄພ, ປ້ອງກັນຄວາມສ່ຽງໃນການເຮັດທຸລະກຳຜ່ານບັດ, ຄຸ້ມຄອງຄວາມສ່ຽງທຸກບັນດາການເຄື່ອນໄຫວຜ່ານທະນາຄານເອເລັກໂຕຣນິກ, ຮັກສາຂໍ້ມູນທີ່ກ່ຽວຂ້ອງເວລາເຮັດທຸລະກຳຜ່ານບັດ; ຮັບປະກັນລະບົບພື້ນຖານໂຄງລ່າງ, ເຕັກນິກນຳໃຊ້ວິຊາການການຄຸ້ມຄອງເວລາອອກບັດ, ຊຳລະບັດ, ດຳເນີນການຊຳລະຢ່າງລະອຽດ ແລະ ປອດໄພ;

15.2. Sacombank Lao ມີບໍລິການ 24/7 ເພື່ອຮັບ, ແກ້ໄຂບັນຫາຕ່າງໆທີ່ເກີດຈາກການນຳໃຊ້ບັດຂອງເຈົ້າຂອງບັດໃຫ້ທ່ວງທັນ;

15.3. ເມື່ອເຈົ້າຂອງບັດມີຄວາມຕ້ອງການ, Sacombank Lao ຈະແນະນຳບໍລິການກ່ຽວກັບບັດ, ການນຳໃຊ້ບັດທີ່ຖືກຕ້ອງຕາມຂັ້ນຕອນ, ບັນດາ ຄວາມສ່ຽງ ແລະ ບັນຫາທີ່ຄິດວ່າຈະພົບເມື່ອນຳໃຊ້ບັດ;

15.4. Sacombank Lao ຈະສົ່ງຂໍ້ມູນກ່ຽວກັບບັນດາບັດທີ່ມີລັກສະນະການສໍ້ໂກງ, ປອມແປງ ໃຫ້ອົງການກວດສອບກ່ຽວກັບການອາດສະຍາກຳບັດ, ກວດສອບ, ກວດກາຄືນ ຫຼື ປະສານງານກັບອົງການທີ່ມີສິດອຳນາດ, ອັບເດດລາຍຊື່ບັດທີ່ຕ້ອງປະຕິເສດ ຊຳລະ ຫຼື ມີລັກສະນະປອມແປງໃຫ້ອົງການຊຳລະບັດ ແລະ ຈຸດບໍລິການທີ່ຮັບຊຳລະດ້ວຍບັດ, ປະສານງານກັບບັນດາອົງການ ແລະ ບັນດາຝ່າຍທີ່ກ່ຽວຂ້ອງໃນການປ້ອງກັນອາດສະຍາກຳໃຊ້ບັດເຮັດທຸລະກຳ ແລະ ກວດສອບຈັດການອາດສະຍາກຳບັດຕາມລະບຽບກົດໝາຍຖ້າພົບເຫັນ.

15.5. Sacombank Lao ຈະພິຈາລະນາ, ກວດສອບເອກະສານ, ຕິດຕາມຢ່າງລະອຽດເພື່ອຮັບປະກັນການຊຳລະໂອນເງິນ ດ້ວຍບັດອອກຕ່າງປະເທດວ່າຖືກເປົ້າໝາຍ, ວົງເງິນນຳໃຊ້ບັດ ແລະ ເໝາະສົມຕາມລະບຽບກົດໝາຍກ່ຽວກັບການຄຸ້ມຄອງເງິນຕາ.

15.6. ເຈົ້າຂອງບັດຕ້ອງຮັກສາບັດ, ຮັບປະກັນຄວາມປອດໄພ ແລະ ບໍ່ເປີດເຜີຍໃຫ້ໃຜຮູ້ລະຫັດ PIN, ບັນດາລະຫັດຢັ້ງຢືນວ່າແມ່ນເຈົ້າຂອງບັດໃຫ້ກັບຄົນອື່ນ, ລະຫັດ OTP, ບັນດາວິທີການຢັ້ງຢືນທຸລະກຳໃຫ້ກັບຄົນອື່ນ, ບັນດາຂໍ້ມູນຂອງບັດ, ຂໍ້ມູນຂອງທຸລະກຳ; ແຈ້ງການ ແລະ ປະສານງານກັບ Sacombank Lao ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນກໍລະນີບັດເສຍ ຫຼື ມີການຮຽກຮ້ອງໃຫ້ກວດສອບ, ການຮຽກຮ້ອງ.

ທຸກການນຳໃຊ້ບັດ (ເຖິງວ່າຈະໄດ້ນຳໃຊ້ລະຫັດ PIN ແລະ/ຫຼື OTP ຫຼືບໍ່) ເຖິງວ່າຈະໄດ້ເຮັດທຸລະກຳໂດຍເຈົ້າຂອງບັດ ຫຼື ບຸກຄົນໃດໆກໍ່ຕາມລ້ວນແຕ່ຖືວ່າແມ່ນເຈົ້າຂອງບັດເປັນຄົນເຮັດທຸລະກຳ ແລະ ເຈົ້າຂອງບັດຕ້ອງມີພາລະຮັບຜິດຊອບບັນດາພັນທະ ຫຼື ຜົນກະທົບໃດໆທີ່ເກີດຂຶ້ນຈາກບັນດາທະລຸກຳນັ້ນ.

15.7. ເຈົ້າຂອງບັດຕ້ອງເກັບຮັກສາຂໍ້ມູນບັດ, ລະຫັດນຳໃຊ້ໃນບັນດາ Application ຊຳລະ ທີ່ Sacombank ພັດທະນາໃຫ້ນຳໃຊ້ໃນແຕ່ລະໄລຍະ (ລວມທັງແຕ່ບໍ່ຈຳກັດ QR Code, Samsung Pay) ເພື່ອຫຼີກລ່ຽງບັນດາທຸລະກຳທີ່ບໍ່ແມ່ນຍ້ອນເຈົ້າຂອງບັດເຮັດ.

15.8. ເມື່ອໄດ້ຕົກລົງເຂົ້າຮ່ວມກັບບັນດາອົງການອື່ນກ່ຽວກັບການອອກບັດ, ຊຳລະບັດ, Sacombank Lao, ອົງການຊຳລະບັດຕ້ອງຕົກລົງເຫັນດີນຳກັນວ່າບັນດາຝ່າຍທີ່ກ່ຽວຂ້ອງມີຄວາມຮັບຜິດຊອບ ປະຕິບັດຕາມກົດໝາຍກ່ຽວກັບການຮັກສາຂໍ້ມູນສ່ວນຕົວ, ສິດທິສ່ວນບຸກຄົນ, ຮັກສາເອກະ ສານ, ຂໍ້ມູນບັດ, ທຸລະກຳຂອງເຈົ້າຂອງບັດ.

## 16. ຄວາມຮັບຜິດຊອບຂອງ Sacombank Lao ໃນການກວດສອບ, ແກ້ໄຂການຮຽກຮ້ອງໃນການນຳໃຊ້ບັດ

16.1. ເມື່ອພົບຂໍ້ຜິດພາດ ຫຼື ສົງໄສວ່າມີຂໍ້ຜິດພາດກ່ຽວກັບທຸລະກຳບັດ, ເຈົ້າຂອງບັດມີສິດຮຽກຮ້ອງໃຫ້ Sacombank Lao ກວດສອບ ແລະ ຮັບການຮຽກຮ້ອງຂອງຕົນເອງ. ເຈົ້າຂອງບັດຕ້ອງສະໜອງໃບບິນທຸລະກຳໃຫ້ Sacombank Lao ຫຼື ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງທີ່ເນື້ອໃນສາມາດເປັນຫຼັກຖານ ຂອງການຮຽກຮ້ອງເຖິງ Sacombank Lao ໄດ້. ການກວດສອບຈະຖືກດຳເນີນຕາມກົດລະບຽບຂອງ Sacombank Lao ກ່ຽວກັບການຮຽກຮ້ອງທຸລະກຳ. ຖ້າຜົນກວດສອບອອກມາບໍ່ຄືກັບການຮຽກຮ້ອງ, ເຈົ້າຂອງບັດຕ້ອງມີຄວາມຮັບຜິດຊອບຈ່າຍຄ່າທຳນຽມຄຳຮ້ອງກວດສອບຂໍ້ຜິດພາດໃຫ້ແກ່ Sacombank Lao.

16.2. ເຈົ້າຂອງບັດມີສິດສະເໜີ ໃຫ້ກວດສອບ, ການຮຽກຮ້ອງຂອງລູກຄ້າຕໍ່ Sacombank Lao ແມ່ນໄລຍະເວລາ 60 ວັນນັບແຕ່ມື້ເກີດມີທຸລະກຳທີ່ສະເໜີກວດສອບ, ຮຽກຮ້ອງ. ຖ້າເກີນໄລຍະເວລານີ້, ຫາກວ່າ Sacombank Lao ບໍ່ໄດ້ຮັບການຮຽກຮ້ອງໃດໆຈາກເຈົ້າຂອງບັດ ແມ່ນບັນດາຈຳນວນເງິນທີ່ຄິດໄລ່ເຂົ້າຍອດໜີ້ບັດຈະແມ່ນຫຼັກຖານຢັ້ງຢືນວ່າທຸລະກຳ, ຄ່າໃຊ້ຈ່າຍ, ຄ່າທຳນຽມ, ຈົດໜີ້ ຫຼື/ແລະ ຈົດມີ ແມ່ນຖືກຕ້ອງ ແລະ ມີຜົນສັກສິດ, ຍົກເວັ້ນ Sacombank Lao ຈະມີການຕົກລົງຕ່າງຫາກໃນການປ່ຽນແປງ ແລະ/ຫຼື ເພີ່ມເຕີມບັນດາຈົດກ່າຍເຂົ້າຍອດໜີ້ບໍ່ວ່າເມື່ອໃດຫຼັງຈາກນັ້ນ.

16.3. Sacombank Lao ນຳໃຊ້ ສອງວິທີທາງໃນການຮັບຂໍ້ມູນກວດສອບ, ການຮຽກຮ້ອງຂອງເຈົ້າຂອງບັດລວມມີ: ຜ່ານເບີສູນບັດ (ມີການບັນທຶກສຽງ, ບໍລິການ 24/24 ຊົ່ວໂມງຕໍ່ມື້, 7/7 ມື້ຕໍ່ອາທິດ) ແລະ ຜ່ານຈຸດບໍລິການຂອງ Sacombank Lao; ຮັບປະກັນຢັ້ງຢືນວ່າຂໍ້ມູນພື້ນຖານຖືກຕ້ອງຕາມບັນດາຂໍ້ມູນທີ່ເຈົ້າຂອງບັດສະໜອງໃຫ້ Sacombank Lao.

Sacombank Lao ຈະດຳເນີນການລັອກບັດທັນທີເມື່ອເຈົ້າຂອງບັດສະເໜີ ຍ້ອນສົງໄສວ່າມີການລັກລອບຂໍ້ມູນບັດ ຫຼື ບັດສູນຫາຍ. ຖ້າມີການນຳໃຊ້ບັດຫຼັງຈາກທີ່ລູກຄ້າແຈ້ງລັອກບັດ Sacombank Lao ຈະຮັບຜິດຊອບຕໍ່ກັບຄວາມເສຍຫາຍທັງໝົດທາງການເງິນທີ່ເກີດຂຶ້ນຕໍ່ກັບເຈົ້າຂອງບັດ.

ໃນເວລາສະເໜີກວດສອບ, ຮຽກຮ້ອງຢູ່ບັນດາຈຸດບໍລິການຂອງ Sacombank Lao, ເຈົ້າຂອງບັດນຳໃຊ້ຟອມສະເໜີກວດສອບ, ຮຽກຮ້ອງຂອງ Sacombank Lao. ໃນກໍລະນີຮັບຂໍ້ມູນຜ່ານເບີສູນບັດ, ເຈົ້າຂອງບັດຕ້ອງປະກອບໃບສະເໜີກວດສອບ, ຮຽກຮ້ອງຕາມແບບຟອມຂອງ Sacombank Lao ພາຍໃນໄລຍະເວລາ 05 ມື້ເຮັດວຽກນັບແຕ່ມື້ທີ່ເຈົ້າຂອງບັດສະເໜີກວດສອບ, ຮຽກຮ້ອງຜ່ານເບີສູນບັດ ເພື່ອເປັນບ່ອນອີງ ແລະ ຢັ້ງຢືນການແກ້ໄຂບັນດາການສະເໜີກວດສອບ, ຮຽກຮ້ອງ. ກໍລະນີມອບສິດໃຫ້ຜູ້ອື່ນສະເໜີກວດສອບ, ຮຽກຮ້ອງ, ເຈົ້າຂອງບັດຕ້ອງປະຕິບັດຕາມລະບຽບກົດໝາຍໃນການມອບສິດ.

16.4. Sacombank Lao ຈະແກ້ໄຂໃບສະເໜີການກວດສອບ, ຮຽກຮ້ອງ ແລະ ໃຫ້ຄຳຕອບໃນການກວດສອບ, ຮຽກຮ້ອງໃຫ້ເຈົ້າຂອງບັດໃນຂອບເຂດໄລຍະເວລາຈັດການແກ້ໄຂສະເໜີກວດສອບ, ຮຽກຮ້ອງແມ່ນ 45ມື້ເຮັດວຽກນັບແຕ່ມື້ຮັບການສະເໜີກວດສອບ, ຮຽກຮ້ອງຂອງເຈົ້າຂອງບັດຕາມໜຶ່ງໃນບັນດາວິທີການຮັບການສະເໜີກຳນົດໃນມາດຕາ 16.3 ນີ້.

16.5. ຈັດການແກ້ໄຂການກວດສອບ, ຮຽກຮ້ອງ:

ໃນໄລຍະເວລາສູງສຸດ 5 ມື້ເຮັດວຽກນັບແຕ່ມື້ແຈ້ງການຜົນການກວດສອບ, ຮຽກຮ້ອງໃຫ້ເຈົ້າຂອງບັດ, Sacombank Lao ຈະດຳເນີນການ ທົດແທນໃຫ້ເຈົ້າຂອງບັດຕາມການຕົກລົງ ແລະ ກຳນົດຂອງກົດໝາຍຕໍ່ກັບບັນດາຄວາມເສຍຫາຍທີ່ເກີດຂຶ້ນທີ່ບໍ່ແມ່ນຄວາມຜິດຂອງເຈົ້າຂອງບັດ ແລະ/ຫຼື ບໍ່ແມ່ນບັນດາກໍລະນີສຸດວິໄສທີ່ໄດ້ຕົກລົງໃນສັນຍາ. ກໍລະນີຄວາມເສຍຫາຍເກີດຂຶ້ນຍ້ອນຄວາມຜິດພາດຂອງບັນດາຝ່າຍທີ່ກ່ຽວຂ້ອງ (ອົງການຊຳລະບັດ, ອົງການ Swithing ບັດ, ອົງການຊຳລະສາກົນ, ຈຸດບໍລິການ ທີ່ຮັບຊຳລະດ້ວຍບັດ), ຝ່າຍທີ່ຜິດດຳເນີນການຊົດໃຊ້ໃຫ້ Sacombank Lao ຕາມການຕົກລົງຂອງແຕ່ລະຝ່າຍເຊິ່ງເໝາະສົມກັບລະບຽບກົດໝາຍ;

ໃນກໍລະນີກາຍເວລາຂ້າງເທິງແຕ່ຍັງບໍ່ສາມາດຊອກຫາສາເຫດໄດ້ວ່າຄວາມຜິດຂຶ້ນກັບຝ່າຍໃດແມ່ນພາຍໃນ 15 ມື້ເຮັດວຽກຕໍ່ໄປ Sacombank Lao ຈະຕົກລົງກັບເຈົ້າຂອງບັດເຖິງວິທີການແກ້ໄຂ ຫຼື ຊົດໃຊ້ຄວາມເສຍຫາຍຊົ່ວຄາວໃຫ້ເຈົ້າຂອງບັດຈົນກວ່າມີຜົນສະຫຼຸບສຸດທ້າຍຂອງອົງການທີ່ມີສິດອຳນາດຕັດສິນແບ່ງຄວາມຜິດຢ່າງຈະແຈ້ງ ແລະ ຄວາມຮັບຜິດຊອບຂອງແຕ່ລະຝ່າຍ.

ກໍລະນີສະຖານະການນີ້ມີລັກສະນະອາດສະຍາກຳ, Sacombank Lao ຈະແຈ້ງການໃຫ້ອົງການຈັດຕັ້ງຂອງລັດທີ່ມີສິດຕາມລະບຽບກົດໝາຍໃນການດຳເນີນຄະດີອາຍາ ແລະ ລາຍງານທະນາຄານແຫ່ງ ສປປ ລາວ; ພ້ອມດຽວກັນນັ້ນ, ແຈ້ງການເປັນລາຍລັກອັກສອນໃຫ້ເຈົ້າຂອງບັດກ່ຽວກັບສະພາບການຈັດການແກ້ໄຂການສະເໜີກວດສອບ, ຮຽກຮ້ອງ. ການຈັດການແກ້ໄຂຜົນການສະເໜີກວດສອບ, ຮຽກຮ້ອງທີ່ເປັນພາລະແກ້ໄຂຂອງອົງການລັດທີ່ມີສິດອຳນາດ. ໃນກໍລະນີອົງການລັດທີ່ມີສິດອຳນາດແຈ້ງຜົນການແກ້ໄຂບໍ່ມີສ່ວນກ່ຽວຂ້ອງກັບອາດສະຍາກຳ, ໃນໄລຍະ 15 ມື້ເຮັດວຽກນັບແຕ່ມີບົດສະຫຼຸບຈາກອົງການລັດທີ່ມີສິດອຳນາດ, Sacombank Lao ຈະຕົກລົງກັບເຈົ້າຂອງບັດເຖິງວິທີແກ້ໄຂຕໍ່ກັບຜົນການສະ ເໜີກວດສອບ, ຮຽກຮ້ອງ.

16.6. ກໍລະນີ Sacombank Lao, ເຈົ້າຂອງບັດ ແລະ ບັນດາຝ່າຍທີ່ກ່ຽວຂ້ອງເຈລະຈາກັນບໍ່ໄດ້ ແລະ/ຫຼື ບໍ່ເຫັນດີນຳການແກ້ໄຂການສະເໜີກວດສອບຮຽກຮ້ອງນີ້, ການແກ້ໄຂຂໍ້ຂັດແຍ່ງແມ່ນຈະໄດ້ດຳເນີນການຕາມລະບຽບກົດໝາຍ.

## 17. ການຕໍ່ອາຍຸບັດສິນເຊື່ອ

17.1. Sacombank Lao ມີສິດປະຕິເສດການຕໍ່ອາຍຸບັດໃນກໍລະນີເຈົ້າຂອງບັດຝ່າຝືນຂໍ້ກຳນົດ ແລະ ເງື່ອນໄຂໃດໜຶ່ງ.

17.2. ກ່ອນບັດໝົດອາຍຸການນຳໃຊ້, Sacombank Lao ຈະແຈ້ງໃຫ້ເຈົ້າຂອງບັດກ່ຽວກັບການຕໍ່ອາຍຸບັດຜ່ານ ໂທລະສັບ/e-mail/SMS ຕາມກົດລະບຽບ, ຖ້າ Sacombank Lao ໄດ້ຮັບການຕອບຮັບວ່າເຫັນດີຈາກເຈົ້າຂອງບັດກ່ຽວກັບການຕໍ່ອາຍຸບັດ, Sacombank Lao ຈະດຳເນີນການຕໍ່ອາຍຸບັດໃຫ້ເຈົ້າຂອງບັດ. ຫຼັງຈາກນັ້ນ, Sacombank Lao ຈະຈັດສົ່ງບັດໃໝ່ໃຫ້ເຈົ້າຂອງບັດຕາມທີ່ຢູ່ທີ່ໄດ້ລົງທະບຽນໄວ້. Sacombank Lao ຈະບໍ່ຮັບຜິດຊອບຖ້າບັດຕົກເຮ່ຍ, ເສຍ, ຖືກລັກ ຫຼື ລະເມີດໃຊ້ໃນກໍລະນີນີ້.

### ວົງເງິນ

ບັນດາວົງເງິນຊຳລະ, ວົງເງິນໂອນ, ວົງເງິນຖອນເງິນສົດ (ລວມທັງວົງເງິນຖອນເງິນສົດຢູ່ຕ່າງປະເທດ) ແລະ ບັນດາວົງເງິນອື່ນໆ ໃນການນຳໃຊ້ບັດສຳລັບເຈົ້າຂອງບັດແມ່ນຈະໄດ້ຮັບອານຸຍາດຕາມລະບຽບຂອງ Sacombank Lao ໃນແຕ່ລະໄລຍະ ແລະ ເໝາະສົມກັບລະບຽບກົດໝາຍ.

## 18. ເກີນວົງເງິນ

ວົງເງິນບັດແມ່ນ Sacombank Lao ຈະແຈ້ງການເປັນລາຍລັກອັກສອນຕິດຄັດກັບບັດເມື່ອມອບບັດໃຫ້ເຈົ້າຂອງບັດ.

ເຈົ້າຂອງບັດຕ້ອງຕິດຕາມ ແລະ ປະຕິບັດບັນດາວິທີການທີ່ຈຳເປັນເພື່ອໃຫ້ຍອດໜີ້ຂອງຕົນບໍ່ເກີນວົງເງິນທີ່ທາງທະນາຄານໄດ້ອະນຸມັດໃຫ້ບໍ່ວ່າຍາມໃດກໍ່ຕາມ. ເຈົ້າຂອງບັດມີໜ້າທີ່ຮັບຜິດຊອບຊຳລະທຸກທຸລະກຳ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການເກີນວົງເງິນ.

Sacombank Lao ມີສິດທີ່ຈະບໍ່ແຈ້ງເຕືອນກ່ອນ, ປະຕິເສດບໍ່ວ່າທຸລະກຳໃດໆ, ຢຸດຕິຊົ່ວຄາວການນຳໃຊ້ບັດຂອງເຈົ້າຂອງບັດ ແລະ/ຫຼື ໄລ່ຄ່າທຳນຽມເກີນວົງເງິນຂອງ Sacombank Lao,ຖ້າວົງເງິນເກີນກຳນົດ, Sacombank Lao ສາມາດຮຽກຮ້ອງຊຳລະດ່ວນຈຳນວນເງິນທີ່ເກີນວົງເງິນໄປນັ້ນ ຫຼື ຈຳນວນເງິນຄ້າງຈ່າຍ. ການນຳໃຊ້ວົງເງິນເກີນກຳນົດໂດຍທີ່ບໍ່ໄດ້ຮັບການອະນຸມັດຂອງ Sacombank Lao ຖືວ່າເປັນການກະທຳທີ່ສໍ້ໂກງຂອງເຈົ້າຂອງບັດ.

## 19. ເພີ່ມ/ຫຼຸດ ວົງເງິນ.

ເຈົ້າຂອງບັດຕົກລົງເຫັນດີຢ່າງບໍ່ມີເງື່ອນໄຂໃນການໃຫ້ Sacombank Lao ມີສິດຕັດສິນເພີ່ມ ຫຼື ຫຼຸດວົງເງິນໃດໆເຖິງແມ່ນວ່າເຈົ້າຂອງບັດຈະເຄີຍນຳໃຊ້ ຫຼື ອີງໃສ່ປະຫວັດການນຳໃຊ້ບັດໂດຍບໍ່ຕ້ອງມີເອກະສານຢັ້ງຢືນກ່ອນຂອງເຈົ້າຂອງບັດກ່ຽວກັບການເພີ່ມ ຫຼື ຫຼຸດວົງເງິນນີ້.

### ພັນທະການຊຳລະຂອງເຈົ້າຂອງບັດ

## 20. ພັນທະໃນການຊຳລະຂອງເຈົ້າຂອງບັດ

20.1 ເຈົ້າຂອງບັດຕົກລົງເຫັນດີວ່າຕົນໄດ້ຮັບບັດ, ເມື່ອບັດໄດ້ຮັບການເປີດການນຳໃຊ້ ແລະ/ຫຼື ມີທຸລະກຳເກີດຂຶ້ນ. ເຈົ້າຂອງບັດ, ແມ່ນລວມທັງເຈົ້າຂອງບັດຫຼັກ ແລະ ເຈົ້າຂອງບັດເສີມທັງໝົດ, ແມ່ນຕ້ອງຮັບຜິດຊອບໃນການຊຳລະທຸກທຸລະກຳ ແລະ ລວມທັງຄ່າທຳນຽມ, ຄ່າໃຊ້ຈ່າຍທີ່ເກີດຂຶ້ນເທິງບັດຍ້ອນການນຳໃຊ້ບັດລວມມີແຕ່ບໍ່ຈຳກັດບັນດາຄ່າໃຊ້ຈ່າຍທີ່ບໍ່ສົ່ງຄືນ, ຄ່າທຳນຽມ ແລະ ຄ່າພາສີອາກອນຕາມກົດໝາຍຈົນກ່ວາຈະຊຳລະຄົບຖ້ວນໃຫ້ກັບ Sacombank Lao ໂດຍບໍ່ຈຳຕ້ອງມີຫຼັກຖານເປັນໃບບິນທີ່ມີລາຍເຊັນ ຫຼື ໃບຢັ້ງຢືນຕ່າງໆ.

20.2. ພັນທະຊຳລະຂອງເຈົ້າຂອງບັດຈະສືບຕໍ່ມີຜົນສັກສິດ ໃນກໍລະນີບັດໄດ້ອອກໃໝ່ ຫຼື ໄດ້ປ່ຽນໂດຍ Sacombank Lao ແລະ ໃນກໍລະນີບັດຖືກຢຸດຕິການນຳໃຊ້ບໍ່ວ່າຈະເຫດຜົນໃດກໍ່ຕາມ.

## 21. ກຳນົດຊຳລະ

21.1 ເຈົ້າຂອງບັດຕ້ອງຊຳລະຈຳນວນເງິນທີ່ຮອດກຳນົດຈ່າຍ ຫຼື ຈຳນວນເງິນຊຳລະຂັ້ນຕ່ຳເຂົ້າໃນມື້ ຫຼື ກ່ອນມື້ຮອດກຳນົດທີ່ລະບຸໄວ້ໃນໃບແຈ້ງທຸລະກຳ.

21.2 ໃນກໍລະນີຫຼັງຈາກມື້ທີ່ຮອດກຳນົດແຕ່ເຈົ້າຂອງບັດບໍ່ຊຳລະ ຫຼື ຊຳລະໜ້ອຍກ່ວາຈຳນວນເງິນຊຳລະຂັ້ນຕ່ຳທີ່ໄດ້ແຈ້ງໃນໃບແຈ້ງທຸລະກຳ, ເຈົ້າຂອງບັດຕ້ອງຮັບຜິດຊອບຄ່າທຳນຽມຊຳລະຊ້າ.

21.3. ຮູບແບບການຊຳລະ: ເຈົ້າຂອງບັດສາມາດຊຳລະໃຫ້ Sacombank Lao ດ້ວຍບັນດາຊ່ອງທາງຄື:

a) ມອບເງິນສົດຊຳລະຢູ່ສາຂາ/ໜ່ວຍບໍລິການຂອງ Sacombank Lao;
b) ໂອນເງິນທີ່ Sacombank Lao ຫຼື ທະນາຄານອື່ນ;
c) ການຊຳລະແບບອັດຕະໂນມັດ: ການຊຳລະອັດຕະໂນມັດໄດ້ປະຕິບັດໃນກໍລະນີເຈົ້າຂອງບັດມີບັນຊີເງິນຝາກບໍ່ມີກຳນົດຢູ່ Sacombank Lao ຫຼື ອົງກອນໃດໜຶ່ງທີ່ໄດ້ຕົກລົງກັບ Sacombank Lao ກ່ຽວກັບການຈົດໜີ້ອັດຕະໂນມັດເພື່ອເກັບໜີ້ຈາກບັນຊີເງິນຝາກບໍ່ມີກຳນົດຂອງເຈົ້າຂອງບັດ ແລະ ເຈົ້າຂອງບັດຕ້ອງໄດ້ລົງທະບຽນນຳໃຊ້ບໍລິການຊຳລະໜີ້ອັດຕະໂນມັດກັບ Sacombank Lao.

ດ້ວຍສັນຍານີ້, ເຈົ້າຂອງບັດຕົກລົງເຫັນດີມອບສິດທັງໝົດໃຫ້ Sacombank Lao ຫັກເງິນຈາກບັນຊີເງິນຝາກບໍ່ມີກຳນົດຂອງເຈົ້າຂອງບັດເພື່ອຊຳລະຈຳນວນເງິນທີ່ຮອດກຳນົດຈ່າຍ ຫຼື ເງິນຊຳລະຂັ້ນຕ່ຳທີ່ລະບຸໃນໃບແຈ້ງທຸລະກຳ.

ເຈົ້າຂອງບັດຕ້ອງຮັບປະກັນວ່າຢູ່ໃນບັນຊີທີ່ລົງທະບຽນຊຳລະອັດຕະໂນມັດຕ້ອງມີຍອດເງິນໃນບັນຊີພຽງພໍເພື່ອຊຳລະໜີ້ທຸກບ້ວງໜີ້ທີ່ Sacombank Lao .

ກໍລະນີເຈົ້າຂອງບັດຊຳລະຍອດໜີ້ບັດສິນເຊື່ອຢູ່ທະນາຄານອື່ນ, ເຈົ້າຂອງບັດຕ້ອງຂຽນເລກບັນຊີໃຫ້ຖືກຕ້ອງ ແລະ ຮັບຜິດຊອບບັນດາຂໍ້ມູນ ທີ່ໄດ້ໃຫ້ໄວ້, Sacombank Lao ພຽງແຕ່ແຈ້ງມີເຂົ້າບັດຕາມເລກບັນຊີທີ່ເຈົ້າຂອງບັດໄດ້ໃຫ້ໄວ້ນັ້ນ, ໂດຍທີ່ບໍ່ມີໜ້າທີ່ກວດສົມທຽບເບິ່ງຊື່ ແລະ ນາມສະກຸນຂອງເຈົ້າຂອງບັດ.

21.4. ຖ້າຫາກວ່າຍອດເງິນຢູ່ໃນບັນຊີທີ່ລົງທະບຽນຊຳລະອັດຕະໂນມັດບໍ່ພຽງພໍຊຳລະໃຫ້ຈຳນວນເງິນທີ່ຮອດກຳນົດຈ່າຍ ຫຼື ເງິນຊຳລະຂັ້ນຕ່ຳ, ເຈົ້າຂອງບັດຕ້ອງໄດ້ເຂົ້າມາຊຳລະໂດຍກົງ ຫຼື ທາງອ້ອມຕໍ່ກັບຈຳນວນເງິນທີ່ຍັງຄ້າງຕາມກຳນົດ ແລະ ຮັບຜິດຊອບຄ່າທຳນຽມ, ດອກເບ້ຍທັງໝົດ (ຖ້າມີ).

21.5. ກໍລະນີເຈົ້າຂອງບັດອອກບັດໃໝ່ຕື່ມຕາມຂໍ້ກຳນົດຢູ່ໃນມາດຕາ 2.1, ເຈົ້າຂອງບັດຈະໄດ້ລົງທະບຽນການຊຳລະໂດຍອັດຕະໂນມັດຈາກບັນຊີເງິນຝາກບໍ່ມີກຳນົດທີ່ໄດ້ລົງທະບຽນກັບບັດສິນເຊື່ອກ່ອນໜ້ານັ້ນ.

## 22. ຈຳນວນເງິນຊຳລະ

22.1. ເຈົ້າຂອງບັດຮັບຜິດຊອບຊຳລະຈຳນວນເງິນທີ່ຮອດກຳນົດຈ່າຍໃນມື້ ຫຼື ກ່ອນມື້ຮອດກຳນົດທີ່ລະບຸໄວ້ໃນໃບແຈ້ງທຸລະກຳແຕ່ລະເດືອນທີ່ສົ່ງໃຫ້ເຈົ້າຂອງບັດ. ເຖິງຢ່າງໃດກໍ່ຕາມເຈົ້າຂອງບັດມີສິດເລືອກຊຳລະຈຳນວນເງິນລວມທີ່ຮອດກຳນົດຕ້ອງຈ່າຍ, ເງິນຊຳລະຂັ້ນຕ່ຳ ຫຼື ຈຳນວນເງິນໃດໜຶ່ງທີ່ຢູ່ໃນລະຫວ່າງຈຳນວນເງິນລວມທີ່ຮອດກຳນົດຈ່າຍ ແລະ ເງິນຊຳລະຂັ້ນຕ່ຳເພື່ອຊຳລະໃຫ້ກັບ Sacombank Lao.

22.2. ເງິນຊຳລະຂັ້ນຕ່ຳແມ່ນລວມ:

a) ຂຶ້ນກັບຈຳນວນເງິນໃດໃຫຍ່ກວ່າລະຫວ່າງຈຳນວນເງິນທີ່ຮອດກຳນົດຈ່າຍ, ບໍ່ລວມເຖິງຈຳນວນເງິນໃດໆທີ່ເກີນວົງເງິນ, ຄູນໃຫ້ສ່ວນຮ້ອຍທີ່ໄດ້ກຳນົດໄວ້ລ່ວງໜ້າ ແລະ ເງິນຊຳລະຂັ້ນຕ່ຳທີ່ Sacombank Lao ກຳນົດໃຫ້ເຈົ້າຂອງບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້.
b) ຈຳນວນເງິນໃດໆທີ່ເກີນວົງເງິນ, ບໍ່ລວມເຖິງຈຳນວນເງິນໃດໆທີ່ເກີນວົງເງິນທີ່ລວມໃນເງິນຊຳລະຂັ້ນຕ່ຳທີ່ໄດ້ແຈ້ງໃນໃບແຈ້ງທຸລະກຳຄັ້ງກ່ອນ; ແລະ
c) ບໍ່ວ່າບ້ວງໃດໆທີ່ຍັງບໍ່ທັນຊຳລະຂອງເງິນຊຳລະຂັ້ນຕ່ຳທີ່ໄດ້ແຈ້ງໃນໃບແຈ້ງທຸລະກຳຄັ້ງກ່ອນ. ຖ້າມື້ຮອດກຳນົດຈ່າຍ ຕົກຖືກວັນເສົາ, ວັນອາທິດ, ວັນພັກພາຍໃນຂອງ Sacombank Lao ຫຼື ວັນພັກເທດສະການ, ການຊຳລະຈະເລື່ອນໃສ່ມື້ເຮັດວຽກຕໍ່ໄປຖ້າມີການປະກາດແຈ້ງການປ່ຽນແປງ.

## 23. ຫຼັກການການຊຳລະ

ຍົກເວັ້ນກໍລະນີທີ່ Sacombank Lao ມີຂໍ້ກຳນົດຕ່າງຫາກ, ການຊຳລະຈະໄດ້ປະຕິບັດຕາມລຳດັບດັ່ງລຸ່ມນີ້:

a) ບັນດາຄ່າທຳນຽມ ແລະ/ຫຼື ດອກເບ້ຍຂອງງວດກ່ອນໜ້າ;
b) ທຸລະກຳຖອນເງິນສົດ/ທຽບເທົ່າການຖອນເງິນສົດຂອງງວດກ່ອນ;
c) ທຸລະກຳການຊື້ສິນຄ້າ/ທຸລະກຳ Online ຂອງງວດກ່ອນ;
d) ບັນດາຄ່າທຳນຽມ ແລະ/ຫຼື ດອກເບ້ຍໃນງວດນີ້;
e) ທຸລະກຳຖອນເງິນສົດ/ທຽບເທົ່າການຖອນເງິນສົດໃນງວດນີ້;
f) ທຸລະກຳຊື້ສິນຄ້າ/ທຸລະກຳ Online ໃນງວດນີ້.

## 24. ເຈົ້າຂອງບັດຕ້ອງຊຳລະເງິນເປັນສະກຸນເງິນກີບ LAK

ສຳລັບບັນດາທຸລະກຳທີ່ເປັນເງິນຕາ. ອົງການບັດສາກົນ ຫຼື Sacombank Lao ຈະແລກປ່ຽນເງິນຕາດ້ວຍການນຳໃຊ້ອັດຕາແລກປ່ຽນທີ່ທະນາຄານ Sacombank Lao ກຳນົດ ຫຼື ບັນດາຂໍ້ກຳນົດຂອງບັດສາກົນ. Sacombank Laoຈະນຳໃຊ້ຄ່າທຳນຽມຊຳລະເງິນຕ່າງສະກຸນ.

## 25. ການຄິດໄລ່ດອກເບ້ຍ

25.1. ເຈົ້າຂອງບັດຕົກລົງເຫັນດີຊຳລະດອກເບ້ຍທີ່ເກີດຂຶ້ນເທິງບັດ. ດອກເບ້ຍຖືກຄິດໄລ່ດັ່ງນີ້:

a) ຕໍ່ກັບທຸລະກຳຊື້ສິນຄ້າ, ທຸລະກຳຊຳລະບັດ Online (ບໍ່ນຳໃຊ້ກັບບັດສິນເຊື່ອພາຍໃນ, ຄ່າທຳນຽມ, ຄ່າໃຊ້ຈ່າຍ ແລະ ລວມຍອດໜີ້ອື່ນໆທັງ ໝົດເທິງບັດ): ຖ້າເຈົ້າຂອງບັດບໍ່ຊຳລະ ຫຼື ຊຳລະບໍ່ຄົບຈຳນວນເງິນທີ່ຮອດກຳນົດຈ່າຍໃນມື້ ຫຼື ກ່ອນມື້ຮອດກຳນົດຕາມໃບແຈ້ງທຸລະກຳ, ເຈົ້າຂອງບັດຕ້ອງຊຳລະດອກເບ້ຍໃຫ້ກັບ Sacombank Lao ຕໍ່ກັບບັນດາໜີ້ທັງໝົດທີ່ສະແດງໃນໃບແຈ້ງທຸລະກຳປະຈຸບັນ ແລະ ຕໍ່ກັບບ້ວງໜີ້ອື່ນໆຂອງບັດທີ່ເກີດຂຶ້ນຫຼັງຈາກນັ້ນ, ຈົນກວ່າບ້ວງໜີ້ທັງໝົດຮອດກຳນົດລະບຸໃນໃບແຈ້ງທຸລະກຳໃໝ່ສຸດໃຫ້ຊຳລະໃນມື້ ຫຼື ກ່ອນມື້ຮອດກຳນົດຈ່າຍ. ດອກເບ້ຍຖືກຄິດໄລ່ນັບແຕ່ມື້ເຈົ້າຂອງບັດເຮັດທຸລະກຳ ຈົນຮອດໝົດມື້ວຽກຊຳລະໄດ້ປະຕິບັດຢ່າງຄົບຖ້ວນ.

ຖ້າເຈົ້າຂອງບັດຊຳລະໜີ້ທັງໝົດທີ່ຮອດກຳນົດຈ່າຍໃນມື້ ຫຼື ກ່ອນມື້ຮອດກຳນົດຈ່າຍຕາມໃບແຈ້ງທຸລະກຳແມ່ນເຈົ້າຂອງບັດຈະໄດ້ຮັບການຍົກ ເວັ້ນດອກເບ້ຍໃນທຸກທຸລະກຳຊື້ສິນຄ້າໃນໃບແຈ້ງການປະຈຸບັນ. ຕໍ່ກັບທຸລະກຳທີ່ຊື້ສິນຄ້າດ້ວຍບັດສິນເຊື່ອພາຍໃນ, ດອກເບ້ຍຈະຖືກຄິດໄລ່ຕັ້ງແຕ່ເວລາເຈົ້າຂອງບັດເຮັດທຸລະກຳຈົນຮອດໝົດມື້ເຈົ້າຂອງບັດຊຳລະໜີ້ທັງໝົດທີ່ໄດ້ນຳໃຊ້.

b) ສຳລັບທຸລະກຳຖອນເງິນສົດ ແລະ ທູລະກຳທຽບເທົ່າກັບການຖອນເງິນສົດ: ດອກເບ້ຍແມ່ນໄລ່ຕັ້ງແຕ່ມື້ເຮັດທຸລະກຳຈົນຮອດມື້ເຈົ້າຂອງບັດຊຳລະຄືນຈຳນວນເງິນທັງໝົດທີ່ໄດ້ຖອນ.

25.2. Sacombank Lao ມີສິດປ່ຽນແປງດອກເບ້ຍໃນແຕ່ລະງວດຕາມລະບຽບຂອງ Sacombank Lao ໂດຍບໍ່ຕ້ອງແຈ້ງໃຫ້ເຈົ້າຂອງບັດຮູ້ກ່ອນ.

## 26. ລະເມີດ/ຝ່າຝືນ

26.1. ການບໍ່ຊຳລະຕາມຈຳນວນເງິນຂັ້ນຕ່ຳຂອງເຈົ້າຂອງບັດຮອດວັນທີ່ໆ 30 ຂອງໄລຍະແຈ້ງໃບແຈ້ງທຸລະກຳເທື່ອທີ່ 2 ແມ່ນຍອດໜີ້ບັດສິນເຊື່ອນັ້ນຈະ ກາຍເປັນໜີ້ເກີນກຳນົດ. ໃນກໍລະນີນີ້, ຍອດໜີ້ທັງໝົດແມ່ນຈະກາຍເປັນວ່າຮອດກຳນົດຈ່າຍທັນທີ ແລະ ເຈົ້າຂອງບັດຕ້ອງຊຳລະ.

26.2. ຖ້າເຈົ້າຂອງບັດມີຫຼາຍກວ່າໜຶ່ງບັດຢູ່ Sacombank Lao, ການລະເມີດບໍ່ຊຳລະພຽງບັດດຽວກໍ່ຈະຖືວ່າລະເມີດໝົດທຸກບັດ. ບໍ່ວ່າຈະກໍລະນີໃດ Sacombank Lao ມີສິດຢຸດຕິການນຳໃຊ້ບັດທີ່ເປີດນຳ Sacombank Lao ທັງໝົດ.

26.3. ພ້ອມດຽວກັນນັ້ນ, ກໍລະນີເຈົ້າຂອງບັດມີບ້ວງໜີ້ໃດເກີນກຳນົດທີ່ນອກເໜືອຈາກຢູ່ Sacombank Lao ແລະ/ຫຼື ບໍ່ວ່າຈະເປັນອົງການ ປ່ອຍສິນ ເຊື່ອໃດກໍ່ຕາມ, ຍອດໜີ້ທັງໝົດຂອງເຈົ້າຂອງບັດຕາມສັນຍານີ້ກໍ່ຈະຖືວ່າເປັນໜີ້ເກີນກຳນົດ ແລະ ເຈົ້າຂອງບັດມີໜ້າທີ່ຊຳລະຍອດໜີ້ທັງໝົດ.

26.4. ຖ້າເຫດການດັ່ງກ່າວເກີດຂຶ້ນ, ເຈົ້າຂອງບັດເຂົ້າໃຈ ແລະ ເຫັນດີໃຫ້ Sacombank Lao ສາມາດປະຕິບັດໜຶ່ງ ຫຼື ຫຼາຍຮູບແບບລຸ່ມນີ້:

a) ຢຸດຕິການນຳໃຊ້ບັດ ແລະ ດຳເນີນການເກັບໜີ້ສິນຄືນທັງໝົດ;
b) ນຳໃຊ້ດອກເບ້ຍໜີ້ເກີນກຳນົດໃຫ້ເໝາະສົມກັບຂໍ້ 27 ມາດຕາ 1 ສຳລັບໜີ້ທັງໝົດຕາມກົດລະບຽບຂອງ Sacombank Lao. ພາຍຫຼັງ 75 ມື້ນັບແຕ່ມື້ສົ່ງໃບແຈ້ງທຸລະກຳຄັ້ງທີ 2, ຖ້າເຈົ້າຂອງບັດບໍ່ຊຳລະ ຫຼື ຊຳລະໜ້ອຍກ່ວາຈຳນວນເງິນທີ່ຊຳລະຂັ້ນຕ່ຳ, Sacombank Lao ຈະຢຸດຕິສິດນຳໃຊ້ບັດຂອງເຈົ້າຂອງບັດ ແລະ ດຳເນີນມາດຕະການທີ່ຈຳເປັນໃນການເກັບໜີ້ກູ້ຢືມ ລວມທັງໂທຫາ/ສົ່ງເອກະສານໃຫ້ອົງການ ຫຼື ບຸກຄົນໃດໜຶ່ງ ເພື່ອແຈ້ງກ່ຽວກັບການລະເມີດຂອງເຈົ້າຂອງບັດ ແລະ ຮຽກຮ້ອງໃຫ້ຊ່ວຍກວດສອບ, ຢັ້ງຢືນ ແລະ/ຫຼື ຮ້ອງຟ້ອງເຈົ້າຂອງບັດ;
c) ໃນກໍລະນີນີ້, ເຈົ້າຂອງບັດຕົກລົງຢ່າງບໍ່ມີເງື່ອນໄຂ ແລະ ບໍ່ຍົກເລີກການມອບສິດໃຫ້ Sacombank Lao ຕາງໜ້າເຈົ້າຂອງບັດເພື່ອເຊັນບໍ່ວ່າຈະເປັນເອກະສານໃດໆ ຫຼື ບໍ່ວ່າຈະເປັນການກະທຳໃດໆທີ່ຈຳເປັນເພື່ອເກັບຄືນໜີ້ນຳເຈົ້າຂອງບັດ;
d) ບັນທຶກຊື່ຂອງເຈົ້າຂອງບັດເຂົ້າໃນລາຍຊື່ບັນດາເຈົ້າຂອງບັດທີ່ລະເມີດ (ຫຼື ບັນດາລາຍຊື່ທີ່ຄ້າຍຄື) ຂອງ Sacombank Lao, ຂອງບັນດາອົງການຈັດຕັ້ງພາກລັດອື່ນໆ ຕາມການເຫັນດີຂອງ Sacombank Lao; ແລະ
e) ມີບູລິມະສິດຫຼາຍກວ່າບັນດາເຈົ້າໜີ້ອື່ນໃນວຽກ, ລະບຽບການຖືກກົດໝາຍ, ທວງທຸກບ້ວງໜີ້ສິນໂດຍການເກັບຈຳນວນເງິນ ຫຼື ຊັບສິນທີ່ Sacombank Lao ໄດ້ເກັບຮັກສາ ຫຼື Sacombank Lao ຕາງໜ້າໃຫ້ເຈົ້າຂອງບັດ.

26.5. ເຈົ້າຂອງບັດຕົກລົງ ຢ່າງບໍ່ມີເງື່ອນໄຂ ແລະ ບໍ່ຍົກເລີກການມອບສິດໃຫ້ Sacombank Lao ມີສິດຫັກເງິນຈາກທຸກບັນຊີລວມທັງແຕ່ບໍ່ຈຳກັດບັນຊີເງິນຝາກປະຢັດ/ບັນຊີເງິນຝາກປະຈຳ ຂອງເຈົ້າຂອງບັດທີ່ເປີດຢູ່ Sacombank Lao ແລະ ຈັດການຊັບສິນຄ້ຳປະກັນ (ຖ້າມີ) ເພື່ອຊຳລະໃຫ້ຍອດໜີ້ໃດໜຶ່ງ ຫຼື ທັງໝົດໂດຍບໍ່ຈຳເປັນມີການຢັ້ງຢືນ ຫຼື ເຫັນດີຈາກເຈົ້າຂອງບັດກ່ອນ. ກໍລະນີ Sacombank Lao ໄດ້ຫັກເງິນຈາກບັນຊີ ແລະ/ຫຼື ຈັດການຊັບສິນຄ້ຳປະກັນແລ້ວແຕ່ກໍ່ຍັງບໍ່ສາມາດເກັບກູ້ໜີ້ສິນໄດ້ຄົບຖ້ວນ, ຍອດໜີ້ທີ່ຍັງເຫຼືອ (ຫຼັງຈາກ Sacombank Lao ເກັບຄືນສ່ວນໜຶ່ງຂອງໜີ້ສິນ ຈາກການຫັກເງິນຢູ່ບັນຊີ ແລະ/ຫຼື ຈັດການກັບຊັບສິນຄ້ຳປະກັນ) ແລ້ວເຈົ້າຂອງບັດຍັງຕ້ອງຮັບຜິດຊອບຊຳລະຍອດໜີ້ທີ່ຍັງ ເຫຼືອໃຫ້ Sacombank Lao ຢ່າງຄົບຖ້ວນ.

### ຄ່າທຳນຽມ

## 27. ບັນດາຄ່າທຳນຽມ

ນອກຈາກດອກເບ້ຍ, ເຈົ້າຂອງບັດຍັງຕ້ອງໄດ້ຈ່າຍຄ່າທຳນຽມອື່ນໆທີ່ກ່ຽວຂ້ອງກັບບັດ, ລວມທັງແຕ່ບໍ່ຈຳກັດບັນດາຄ່າທຳນຽມລຸ່ມນີ້:

a) ຄ່າທຳນຽມແຕ່ລະປີ ແລະ ຄ່າທຳນຽມອອກບັດ (ຖ້າມີ): ເກັບປີລະເທື່ອ.
b) ຄ່າທຳນຽມຖອນເງິນສົດ: ຈະເກັບເມື່ອເຈົ້າຂອງບັດຖອນເງິນສົດ.
c) ຄ່າທຳນຽມບໍລິການທຽບເທົ່າກັບການຖອນເງິນສົດ: ຈະເກັບເມື່ອເຈົ້າຂອງບັດເຮັດທຸລະກຳທຽບເທົ່າກັບການຖອນເງິນສົດ.
d) ຄ່າທຳນຽມແລກປ່ຽນເງິນຕາ: ຈະເກັບໃນການປ່ຽນເງິນຕາມາເປັນເງິນກີບຂອງທຸລະກຳ, ຂຶ້ນກັບສະກຸນເງິນທີ່ປ່ຽນ ແລະ ເວລາເຮັດທຸລະກຳຈະຈົດໜີ້ເຂົ້າບັດ.
e) ຄ່າທຳນຽມປ່ຽນແປງວົງເງິນ: ຈະເກັບເມື່ອເຈົ້າຂອງບັດມີຄວາມຕ້ອງການເພີ່ມ ຫຼື ຫຼຸດວົງເງິນທີ່ໄດ້ອະນຸມັດແລ້ວ.
f) ຄ່າທຳນຽມເບີກເກີນວົງເງິນ: ຈະຄິດໄລ່ເທິງຍອດໜີ້ທີ່ເກີນວົງເງິນທີ່ໄດ້ອະນຸມັດ.
g) ຄ່າທຳນຽມຊຳລະຊ້າ: ຈະເກັບຖ້າເຈົ້າຂອງບັດບໍ່ຊຳລະຈຳນວນເງິນຂັ້ນຕ່ຳໃນມື້ ຫຼື ກ່ອນມື້ຮອດກຳນົດ.
h) ຄ່າທຳນຽມອອກສຳເນົາໃບແຈ້ງທຸລະກຳ: ຈະເກັບເມື່ອເຈົ້າຂອງບັດມີຄວາມຕ້ອງການສຳເນົາໃບແຈ້ງທຸລະກຳ.
i) ຄ່າທຳນຽມອອກສຳເນົາໃບບິນທຸລະກຳ: ຈະເກັບເມື່ອເຈົ້າຂອງບັດມີຄວາມຕ້ອງການເອົາສຳເນົາໃບບິນຂອງສະບັບຕົ້ນ.
j) ຄ່າທຳນຽມປ່ຽນບັດ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ປ່ຽນບັດກ່ອນມື້ບັດໝົດກຳນົດ.
k) ຄ່າທຳນຽມບັດເສຍ ແລະ ປ່ຽນບັດ: ຈະເກັບເມື່ອເຈົ້າຂອງບັດແຈ້ງກັບ Sacombank Lao ວ່າບັດຕົກເຮ່ຍ ຫຼື ເສຍ.
l) ຄ່າທຳນຽມປ່ຽນປະເພດບັດ: ຈະເກັບເມື່ອເຈົ້າຂອງບັດມີຄວາມຕ້ອງການປ່ຽນປະເພດບັດໃໝ່.
m) ຄ່າທຳນຽມອອກ PIN ໃໝ່: ຈະເກັບເມື່ອເຈົ້າຂອງບັດ ຮຽກຮ້ອງໃຫ້ອອກ PIN ໃໝ່.
n) ຄ່າທຳນຽມຮ້ອງຟ້ອງຜິດພາດ: ຈະເກັບເມື່ອຄຳຮ້ອງຟ້ອງຂອງເຈົ້າຂອງບັດບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ.
o) ຄ່າທຳນຽມບໍລິການພິເສດ: ຈະເກັບເມື່ອເຈົ້າຂອງບັດຕ້ອງການກ່ຽວກັບວຽກງານພິເສດ ຫຼື ເພີ່ມເຕີມ ໂດຍທີ່ Sacombank Lao ເຫັນດີແລະປະຕິບັດ.
p) ບັນດາຄ່າທຳນຽມອື່ນປະຕິບັດຕາມລະບຽບການຂອງ Sacombank Lao ໃນແຕ່ລະໄລຍະ.

ຄ່າທຳນຽມຈະຄິດໄລ່ຕາມອັດຕາສ່ວນຮ້ອຍ ຫຼື ບາງຄ່າທຳນຽມຄົງທີ່ຂັ້ນຕ່ຳທີ່ໄດ້ກຳນົດໄວ້ກ່ອນ ຫຼື ອາດຈະລວມທັງສອງ.

ຄ່າທຳນຽມທັງໝົດຈະຖືກຈົດເຂົ້າໃນບັດຂອງເຈົ້າຂອງບັດໃນທັນທີ ຫຼື ໃນໃບແຈ້ງທຸລະກຳໃນງວດຕໍ່ໄປແລ້ວແຕ່ກໍລະນີ.

ລາຍລະອຽດບັນດາຄ່າທຳນຽມໄດ້ລະບຸໄວ້ໃນຕາຕະລາງຄ່າທຳນຽມຂອງ Sacombank Lao. ຕາຕະລາງຄ່າທຳນຽມແມ່ນສ່ວນໜຶ່ງທີ່ບໍ່ສາມາດແຍກອອກຈາກບັນດາຂໍ້ກຳນົດ ແລະ ເງື່ອນໄຂນີ້. ເມື່ອມີການປ່ຽນແປງໃດໜຶ່ງກ່ຽວກັບຄ່າທຳນຽມ, ປະເພດຄ່າທຳນຽມ ແລະ ຮູບແບບການເກັບຄ່າທຳນຽມ, Sacombank Lao ຈະແຈ້ງໃຫ້ເຈົ້າຂອງບັດຮັບຮູ້ຕາມກົດລະບຽບໃນມາດຕາ 7.4 ກ່ອນຢ່າງຕ່ຳ 07 ມື້ທີ່ຄ່າທຳນຽມມີຜົນສັກສິດນຳໃຊ້. ຄ່າທຳນຽມທີ່ປ່ຽນແປງຈະຜູກມັດກັບເຈົ້າຂອງບັດ ຖ້າເຈົ້າຂອງບັດຍັງສືບຕໍ່ນຳໃຊ້ບໍລິການຫຼັງຈາກຄ່າທຳນຽມໃໝ່ມີຜົນສັກສິດນຳໃຊ້. ເຈົ້າຂອງບັດສາມາດເຂົ້າເບິ່ງຄ່າທຳນຽມທີ່ກຳລັງນຳໃຊ້ໃນປະຈຸບັນ ໄດ້ທີ່ www.sacombank.com.la ຫຼື ນຳທຸກສາຂາ/ຫ້ອງບໍລິການ ຂອງ Sacombank Lao ຫຼື ສາມາດໂທລະສັບເຂົ້າມາສອບຖາມທີ່ສູນບໍລິການຂອງ Sacombank Lao ຕາມເລກໂທລະສັບ +856 21 264 222.

### ຂໍ້ກຳນົດອື່ນໆ

## 28. ບັດເສີມ

ເຈົ້າຂອງບັດຫຼັກມີສິດຮຽກຮ້ອງໃຫ້ Sacombank Lao ອອກບັດເສີມໃຫ້, ຈຳນວນບັດເສີມທີ່ສາມາດອອກໃຫ້ສູງສຸດໄດ້ຈັກບັດນັ້ນແມ່ນສາມາດປ່ຽນແປງຕາມກົດລະບຽບຂອງ Sacombank Lao. ການອອກບັດເສີມນັ້ນແມ່ນຂຶ້ນກັບການຕັດສິນໃຈ ແລະ ການເລືອກ, ຄັດຈ້ອນຂອງ Sacombank Lao.

ການນຳໃຊ້ບັດເສີມເປັນຫຼັກຖານຢັ້ງຢືນຂອງການຮັບຮູ້ ແລະ ຍິນຍອມເຫັນດີຂອງເຈົ້າຂອງບັດຫຼັກ.

## 29. ບັດມີການຮັບປະກັນ:

Sacombank Lao ສາມາດຕົກລົງກັບເຈົ້າຂອງບັດເຖິງວິທີການຮັບປະກັນການຊຳລະນຳພັນທະຂອງເຈົ້າຂອງບັດຕາມສັນຍາ. ຖ້າວ່າບັດພ້ອມກັບວິທີຮັບປະກັນການອອກບັດໂດຍ Sacombank Lao, ແມ່ນວິທີຮັບປະກັນຂອງ Sacombank Lao ກຳນົດຈະໄດ້ສ້າງເປັນເອກະສານ ແລະ ເອກະສານນີ້ໄດ້ກາຍເປັນພາກສ່ວນຫນຶ່ງທີ່ບໍ່ສາມາດແຍກອອກສັນຍາ.

## 30. ການປ່ຽນແປງຂໍ້ກຳນົດແລະເງື່ອນໄຂ

ເຈົ້າຂອງບັດຕົກລົງເຫັນດີໃຫ້ Sacombank Lao ມີສິດປ່ຽນແປງ, ປັບປຸງບັນດາຂໍ້ກຳນົດ ແລະ ເງື່ອນໄຂນີ້ ບໍ່ວ່າເມື່ອໃດຫລືເຫດຜົນໃດກໍ່ຕາມແຕ່ຕ້ອງແຈ້ງໃຫ້ເຈົ້າຂອງບັດຮູ້ກ່ອນມີຜົນສັກສິດນຳໃຊ້ດ້ວຍຮູບການໄດ້ກຳນົດຢູ່ມາດຕາ 7.4. ບັນດາຂໍ້ປ່ຽນແປງ, ເພີ່ມເຕີມມີຜົນນຳໃຊ້ຖ້າເຈົ້າຂອງບັດສືບຕໍ່ນຳໃຊ້ບັດສິນເຊື່ອຫຼັງຈາກມີການປ່ຽນແປງ, ເພີ່ມເຕີມມີຜົນສັກສິດນຳໃຊ້ ຍົກເວັ້ນແຕ່ເຈົ້າຂອງບັດທັກທ້ວງດ້ວຍການຢຸດຕິການນຳໃຊ້ບັດຕາມເງື່ອນໄຂໄດ້ກຳນົດຢູ່ມາດຕາ 13 ພາຍໃນ 5 ມື້ນັບແຕ່ມື້ຮັບແຈ້ງການ.

## 31. ຄວາມຮັບຜິດຊອບຂອງ Sacombank Lao ກ່ຽວກັບການສູນເສຍ.

ຖ້າມີການຮ້ອງຟ້ອງເກີດຂຶ້ນຈາກສັນຍາຫຼືການກະທຳໃດໜຶ່ງທີ່ກ່ຽວຂ້ອງທີ່ເຈົ້າຂອງບັດຫຼືຝ່າຍໃດໜຶ່ງທີ່ຕາງໜ້າໃຫ້ເຈົ້າຂອງບັດສາມາດຟ້ອງຄະດີຕໍ່ກັບ Sacombank Lao, ຄວາມຮັບຜິດຊອບຂອງ Sacombank Lao ຈະບໍ່ເກີນຈຳນວນເງິນແມ່ນ: 120.000ກີບ (ຫນຶ່ງແສນຊາວພັນກີບຖ້ວນ) ຫຼືຕ່ຳກ່ວາຕາມການເສຍຫາຍທີ່ເກີດຂຶ້ນໄດ້ຮັບການຢັ້ງຢືນຕົວຈິງ.

## 32. ສະຫລະສິດທິຜົນປະໂຫຍດຈາກການລະເມີດສັນຍາ

ບໍ່ມີການສະຫຼະສິດສິດທິໃນການຝ່າຝືນທູກຂໍ້ກຳນົດ ແລະ ເງື່ອນໄຂໃດໆຂອງຂໍ້ຕົກລົງນີ້ຈະຖືວ່າເປັນການສະຫຼະສິດການໄດ້ຮັບປະໂຫຍດຈາກການລະເມີດຄ້າຍຄືກັບລະເມີດບັນດາຂໍ້ກຳນົດແລະເງື່ອນໄຂອື່ນເຊັ່ນກັນ. ການບໍ່ນຳ ຫຼື ບໍ່ປະຕິບັດບັນດາສິດທີ່ໄດ້ຮັບການອະນຸຍາດຕາມຂໍ້ຕົກລົງນີ້ ຈະບໍ່ຖືເປັນການສະຫຼະສິດຂອງຜູ້ມີສິດຂ້າງເທິງ ຫຼື ຈະບໍ່ໄດ້ຮັບການອະທິບາຍ ແມ່ນການຍົກເລີກໃຫ້ເຈົ້າຂອງບັດ ຈາກການປະຕິບັດຂໍ້ກຳນົດ ແລະ ເງື່ອນໄຂນັ້ນ.

## 33. ຄວາມເປັນສ່ວນຕົວ

ຖ້າຂໍ້ກຳນົດ ແລະ ເງື່ອນໄຂໃດໆຫຼື ສ່ວນໃດໆ ຫລື ລາຍການໃນເອກະສານນີ້ຖືກປະກາດວ່າບໍ່ມີຜົນ ຫຼື ບໍ່ໄດ້ປະຕິບັດໂດຍໜ່ວຍງານພາກລັດທີ່ມີສິດອຳນາດ, ແມ່ນເນື້ອໃນດັ່ງກ່າວຈະບໍ່ເຮັດໃຫ້ຂໍ້ກຳນົດ ແລະ ເງື່ອນໄຂອື່ນ, ສ່ວນໃດຫນຶ່ງ ຫຼື ມາດຕາທັງໝົດເອກະສານສະບັບນີ້.

## 34. ໂອນ, ມອບສິ່ງ

34.1. Sacombank Lao ມີສິດໂອນ ຫຼື ມອບສິ່ງດ້ວຍແບບອື່ນ ຫຼື ສ່ວນໃດໜຶ່ງ ແລະ/ຫຼື ພັນທະຂອງຕົນຕາມທີ່ໄດ້ເຊັນສັນຍານີ້ໃຫ້ຝ່າຍທີ່ສາມດ້ວຍການແຈ້ງການກ່ອນໃຫ້ເຈົ້າຂອງບັດຮູ້. ເມື່ອ Sacombank Lao ໂອນ ຫຼື ມອບສິ່ງສ່ວນໃດສ່ວນໜຶ່ງ ຫຼື ທັງຫມົດ ສິດ ແລະ/ຫຼື ພັນທະຂອງຕົນຕາມສັນຍານີ້ຕ້ອງໄດ້ປະຕິບັດໃຫ້ເໝາະສົມກັບລະບຽບກົດໝາຍ. ເຈົ້າຂອງບັດຈະປະຕິບັດແບບບໍ່ມີເງື່ອນໄຂ ຫຼື ພຶດຕິກຳໃດກໍ່ຕາມ ຫຼື ໄດ້ຮັບເອກກະສານໃດເມື່ອ Sacombank Lao ມີການແນະນຳເພື່ອເຄື່ອນໄຫວໃນການໂອນ ຫຼື ມອບສິ່ງໄດ້ກຳນົດໄວ້ໃນຂໍ້ສັນຍານີ້.

34.2. ເຈົ້າຂອງບັດບໍ່ໄດ້ໂອນ ຫຼືມອບສິດໃຫ້ທັງຫມົດ ຫຼື ສ່ວນໃດໜຶ່ງ ແລະ/ຫຼື ພັນທະຂອງຕົນຕາມກາສັນຍາໃຫ້ກັບບຸກຄົນທີ່ສາມໃດກໍຕາມ. ກໍລະນີເຈົ້າຂອງບັດໂອນ, ມອບສິ່ງສ່ວນໃດໜຶ່ງ ຫຼື ທັງໝົດຂອງການນຳໃຊ້ສິດ ແລະ/ຫຼື ພັນທະຂອງຕົນຕາມສັນຍາສະບັບນີ້ໃຫ້ບຸກຄົນທີສາມໃດ, ເຈົ້າຂອງບັດຕ້ອງຮັບຜິດຊອບທຸກຢ່າງທີ່ກ່ຽວຂ້ອງກັບບຸກຄົນທີ່ສາມໄດ້ນຳໃຊ້ບັດ.

## 35. ກົດໝາຍດັດແກ້

ຂໍ້ກຳນົດເງື່ອນໄຂນີ້ໄດ້ປັງປຸງໂດຍກົດໝາຍປັດຈຸບັນຂອງ ສປປ ລາວ ກ່ຽວກັບການອອກບັດ, ນຳໃຊ້ແລະ ການຊຳລະດ້ວຍບັດ. ໃນກໍລະນີທີ່ເກີດຄວາມຂັດແຍ່ງລະຫວ່າງຂໍ້ກຳນົດ ແລະ ເງື່ອນໄຂນີ້ກັບໃບສະເໜີ, ຂໍ້ກຳນົດແລະເງື່ອນໄຂນີ້ຈະໄດ້ບຸລິມະສິດໃນການນຳໃຊ້.

## 36. ຂໍ້ຂັດແຍ້ງ

ໃນກໍລະນີມີຂໍ້ຂັດແຍ່ງເຊິ່ງແຕ່ພາກສ່ວນບໍ່ສາມາດແກ້ໄຂໄດ້ໂດຍການເຈລະຈາ, ຂໍ້ຂັດແຍ່ງນີ້ຈະໄດ້ຮັບການການແກ້ໄຂໂດຍກົດຫມາຍລາວ.